# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-04 ທັນວາ 2022
ປີທີ 11
ສະບັບທີ 896


## ການນຳພັກ-ລັດ ວາງພວງມາລາເນື່ອງໃນວັນຊາດ



ໜ້າ 2




## ກອງປະຊຸມສະໄໝວິສາມັນຂອງສະພາແຫ່ງຊາດ ຄົ້ນຄວ້າຫລາຍບັນຫາສຳຄັນ



(ສພຊ) ເພື່ອພິຈາລະນາ ແລະ ຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ ໂດຍສະເພາະບັນດາເນື້ອໃນທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ. ໃນລະຫວ່າງວັນທີ 28-29 ພະຈິກ 2022 ຄະນະປະຈຳສະພາແຫ່ງຊາດ ໄດ້ດຳເນີນກອງປະຊຸມສະໄໝວິສາມັນຂອງຕົນຂຶ້ນ ຢູ່

ອ່ານຕໍ່ໜ້າ 2

## ອຸທິດກຸສົນແດ່ອະດີດການນຳຂັ້ນສູງ, ສະພາປະຊາຊົນສູງສຸດ ແລະ ສະພາແຫ່ງຊາດ



ໜ້າ 3

## ຮອງປະທານ ສພຊ ຕ້ອນຮັບຄະນະຜູ້ແທນ ອາດີດທະຫານອາສາສະໝັກ ສສ.ຫວຽດນາມ



(ສພຊ) ວັນທີ 28 ພະຈິກ 2022 ທີ່ຫໍສະພາແຫ່ງຊາດ, ສະຫາຍ ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການຢ້ຽມຢາມຂອງຄະນະຜູ້ແທນອະດີດທະຫານອາສາສະໝັກ ແລະ ຊ່ຽວຊານການທະຫານຫວຽດນາມ ນະຄອນຫລວງຮ່າໂນ້ຍ ນຳໂດຍສະຫາຍ ພົຕ. ຮວ່າງ ແຄ້ງ ຮຶງ ປະທານສະມາຄົມຊ່ວຍເຫລືອຄອບຄົວນັກຮົບເສຍຊີວິດຫວຽດນາມ ເນື່ອງໃນໂອກາດທີ່ເດີນທາງມາຢ້ຽມຢາມ ສປປລາວ ໃນໂອກາດປີສາມັກຄີມິດຕະພາບລາວ-ຫວຽດນາມ ປີ 2022 ເພື່ອສະເຫລີມສະຫລອງວັນສ້າງຕັ້ງສາຍພົວພັນການທູດລາວ-ຫວຽດນາມ ຄົບຮອບ 60 ປີ (5 ກັນຍາ 1962-5 ກັນຍາ 2022) ແລະ ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມືລາວ-ຫວຽດນາມ ຄົບຮອບ 45 ປີ (18 ກໍລະກົດ 1977-18 ກໍລະກົດ

ອ່ານຕໍ່ໜ້າ 3

## ກອງປະຊຸມຄົບຄະນະຂອງ ກສຕສ ປະຈຳປີ 2022



ໜ້າ 3

## ປຶກສາຫາລືການພົວພັນຮ່ວມມື ລະຫວ່າງ ຄະນະມິດຕະພາບລັດຖະສະພາລາວ-ຮົງກາລີ

(ສພຊ) ໃນວັນທີ 29 ພະຈິກ 2022 ທີ່ສະພາແຫ່ງຊາດ, ທ່ານ ນາງ ປິ່ງຄຳ ລາຊະສິມມາ ເລຂາທິການສະພາແຫ່ງຊາດ, ປະທານຄະນະມິດຕະພາບ ລາວ-ຮົງກາລີ ປະຈຳສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ພົບປະກັບທ່ານ Kristof SZATMARY ສະມາຊິກສະພາແຫ່ງຊາດຮົງກາລີ, ຮອງປະທານຄະນະມິດຕະພາບ ຮົງກາລີ-ລາວປະຈຳສະພາແຫ່ງຊາດຮົງກາລີ.

ທ່ານ ນາງ ປິ່ງຄຳ ລາຊະສິມມາ ໄດ້ສະແດງຄວາມຍິນດີຕ້ອນຮັບທ່ານ Kristof SZATMARY ດ້ວຍຄວາມອົບອຸ່ນ ໃນໂອກາດທີ່ເດີນທາງຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປລາວ ທັງສະແດງຄວາມເຊື່ອໝັ້ນວ່າການມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປລາວ ຂອງທ່ານ ແລະ ຄະນະ ໃນຄັ້ງນີ້ ຈະເປັນການປະກອບສ່ວນອັນ

ອ່ານຕໍ່ໜ້າ 3



ໜ້າ 4




ໜ້າ 4



ໜ້າ 4



ໜ້າ 4



ໜ້າ 5



ໜ້າ 5

**ຊົມເຊີຍວັນຊາດ 2 ທັນວາ (02/12/1975-02/12/2022) ຄົບຮອບ 47 ປີ ຢ່າງສຸດໃຈ!**

## ການນໍາພັກ...

(ສພຊ) ເນື່ອງໃນໂອກາດວັນຊາດ ທີ 2 ທັນວາ ຄົບຮອບ 47 ປີ (2/12/1975-2/12/2022) ການນໍາພັກ-ລັດຖະບານ ແຫ່ງ ສປປ ລາວ ນໍາໂດຍສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ປະທານປະເທດ ແຫ່ງ ສປປລາວ ໄດ້ເຂົ້າວາງພວງມາລາຢູ່ອານຸສາວະລີນັກຮົບນິລະນາມ (ດາວແດງ) ແລະ ວາງກະຕ່າດອກໄມ້ຢູ່ໜ້າຮູບປັ້ນຫລໍ່ຂອງປະທານ ໄກສອນ ພົມວິຫານ ໃນຕອນເຊົ້າວັນທີ 2 ທັນວາ ນີ້.



ການວາງພວງມາລາໃນຄັ້ງນີ້, ແມ່ນເພື່ອເປັນການສະແດງຄວາມເຄົາລົບຮັກ, ຄວາມກະຕັນຍູຮູ້ບຸນຄຸນເຖິງຄຸນງາມຄວາມດີ, ນໍ້າໃຈຕໍ່ສູ້ຢ່າງພິລະອາດຫານ ແລະ ບໍ່ຍອມຈໍານົນຂອງບັນພະບູລຸດລາວ ກໍຄືບັນດານັກຮົບປະຕິວັດ ທີ່ໄດ້ເສຍສະຫລະຊີວິດ, ເລືອດເນື້ອເພື່ອພາລະກິດປະຕິວັດຢ່າງອົງອາດກ້າຫານພາຍໃຕ້ການຊີ້ນໍາ-ນໍາພາຂອງພັກປະຊາຊົນປະຕິວັດລາວ ຈົນສາມາດຍາດໄດ້ໄຊຊະນະອັນໃຫຍ່ຫລວງ ແລະ ປະກາດເອກະລາດ, ສະຖາປະນາເປັນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂຶ້ນຢ່າງສະຫງ່າຜ່າເຜີຍ ໃນວັນທີ 2 ທັນວາ 1975.

ພາຍຫລັງສໍາເລັດການວາງພວງມາລາແລ້ວ, ການນໍາພັກ-ລັດ ໄດ້ສືບຕໍ່ເຂົ້າວາງກະຕ່າດອກໄມ້ຢູ່ຕໍ່ໜ້າຮູບປັ້ນຫລໍ່ຂອງປະທານ ໄກສອນ ພົມວິຫານ ອະດີດຜູ້ນໍາທີ່ແສນເຄົາລົບຮັກຂອງປວງຊົນລາວບັນດາເຜົ່າ ເຊິ່ງໃນປີນີ້ ເປັນວັນຄົບຮອບວັນຄ້າຍວັນເກີດຂອງ ປະທານ ໄກສອນ ພົມວິຫານ ຄົບຮອບ 102 ປີ (13/12/1920-13/12/2022) ໂດຍການນໍາພັກ-ລັດເຮົາວາງກະຕ່າດອກໄມ້ຄັ້ງນີ້ ກໍເພື່ອສະແດງຄວາມກະຕັນຍູຮູ້ບຸນຄຸນຕໍ່ ປະທານ ໄກສອນ ພົມວິຫານ ທີ່ເພິ່ນໄດ້ສຸມສະຕິປັນຍາເຂົ້າໃນການຊີ້ນໍາ-ນໍາພາ ພາລະກິດປະຕິວັດ ຕໍ່ສູ້ຕ້ານການຮຸກຮານ, ສາມາດຍາດໄດ້ໄຊຊະນະ ແລະ ປະເທດຊາດໄດ້ຮັບການປົດປ່ອຍຢ່າງສົມບູນ. ພາຍຫລັງສະຖາປານາ ສປປລາວ, ປະທານໄກສອນ ຍັງເປັນຜູ້ນໍາທີ່ມີແນວຄິດລິເລີ່ມ ແລະ ຊອກຫາແນວທາງການປ່ຽນແປງໃໝ່ ໂດຍສະເພາະໄດ້ກໍານົດ 6 ຫຼັກການພື້ນຖານຂອງການປະຕິວັດໃນໄລຍະໃໝ່ ເຊິ່ງໄດ້ນໍາເອົາຄວາມຢູ່ເຢັນເປັນສຸກມາສູ່ປະຊາຊົນລາວບັນດາເຜົ່າ. ຜົນງານ ແລະ ຄຸນງາມຄວາມດີຂອງປະທານ ໄກສອນ ແມ່ນໃຫຍ່ຫລວງທີ່ສຸດ ເພິ່ນໄດ້ກາຍເປັນຕົວແທນລວມຍອດແຫ່ງຄວາມຮັກຊາດ ແລະ ເປັນສັນຍາລັກແຫ່ງຊາດລາວວິລະຊົນ, ຄົນລາວພິລະອາດຫານ ເຊິ່ງຜົນງານ ແລະ ຄຸນງາມຄວາມດີຂອງເພິ່ນ ໄດ້ຈາລຶກໄວ້ໃນຄວາມຊົງຈໍາຂອງປະຊາຊົນລາວບັນດາເຜົ່າຕະຫລອດໄປ.

(ແຫລ່ງຂ່າວ: ປະຊາຊົນ)



## ກອງປະຊຸມ...

ທີ່ຫ້ອງປະຊຸມຄະນະປະຈໍາສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກໍາມະການກົມການເມືອງສູນກາງພັກ, ປະທານຄະນະປະຈໍາສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານຮອງປະທານຄະນະປະຈໍາສະພາແຫ່ງຊາດ, ກໍາມະການຄະນະປະຈໍາສະພາແຫ່ງຊາດ ແລະ ແຂກທີ່ຖືກເຊີນຈາກພາກສ່ວນທີ່ກ່ຽວຂ້ອງ.

ກອງປະຊຸມດັ່ງກ່າວ, ໄດ້ຮັບຟັງການລາຍງານຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດສະຫລຸບຂາດຕົວກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈໍາປີ 2021 ແລະ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈໍາປີ 2022 ແລະ ແຜນງົບປະມານແຫ່ງລັດ ປະຈໍາປີ 2023; ຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈໍາປີ 2022 ແລະ ແຜນການປີ 2023; ລາຍງານກ່ຽວກັບສະພາບການຂົນສິ່ງແຮ່ທາດແບບທົດລອງ ແລະ ການຂົນສິ່ງແບບອື່ນໆ ຜ່ານບັນດາເສັ້ນທາງຕ່າງໆຢູ່ທ້ອງຖິ່ນຕ່າງໆ; ລາຍງານກ່ຽວກັບການກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍ ຈໍານວນ 6 ສະບັບຄື: ຮ່າງກົດໝາຍວ່າດ້ວຍໜັງສືຜ່ານແດນ, ກົດໝາຍວ່າດ້ວຍທະນາຍຄວາມ, ກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມພະຍາດຕິດຕໍ່, ກົດໝາຍວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ, ກົດໝາຍວ່າດ້ວຍອົງການໄອຍະການທະຫານ ແລະ ກົດໝາຍວ່າດ້ວຍທຸລະກໍາທາງອີເລັກໂຕຣນິກ; ລາຍງານຂໍທິດຊີ້ນໍາກ່ຽວກັບແຜນການສ້າງ ແລະ ປັບປຸງກົດໝາຍແຕ່ປີ 2023-2025; ລາຍງານກ່ຽວກັບການກະກຽມຮອບດ້ານໃຫ້ແກ່ການດໍາເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ລາຍງານຜົນສໍາເລັດຂອງການເຂົ້າຮ່ວມກອງປະຊຸມ AIPA ຄັ້ງທີ 43 ແລະ ຢ້ຽມຢາມຢ່າງເປັນທາງການ ຢູ່ຣາຊະອານາຈັກກໍາປູເຈຍ ຂອງຄະນະຜູ້ແທນຂັ້ນສູງສະພາແຫ່ງຊາດ ແຫ່ງ ສປປລາວ ເຊິ່ງນໍາພາໂດຍທ່ານປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໃນລະຫວ່າງວັນທີ 20-26 ພະຈິກ 2022.

(ຂ່າວ: ນາງ ສຸພາວັນ ຫອມສະນິດ,
ພາບ: ນາງ ກຸກກິກ ບຸດດາໄຊ)

## ກອງປະຊຸມຄົບ...

(ສພຊ) ກອງປະຊຸມຄົບຄະນະກໍາມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ປະຈໍາປີ 2022 ໄດ້ໄຂຂຶ້ນໃນວັນທີ 28-29 ພະຈິກ 2022, ທີ່ສະພາແຫ່ງຊາດ ນະຄອນຫລວງວຽງຈັນ ໂດຍການເປັນປະທານຂອງທ່ານ ຣສ. ປອ. ລິນຄໍາ ດວງສະຫວັນ ປະທານກໍາມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສະພາແຫ່ງຊາດ, ເຂົ້າຮ່ວມມີທ່ານ ສົມມາດ ພົນເສນາ ຮອງປະທານສະພາແຫ່ງຊາດ ທັງເປັນຜູ້ຊີ້ນໍາກໍາມາທິການດັ່ງກ່າວ, ມີບັນດາທ່ານລັດຖະມົນຕີທີ່ກ່ຽວຂ້ອງ, ບັນດາທ່ານສະມາຊິກສະພາແຫ່ງຊາດ ທີ່ເປັນກໍາມະການຂອງກໍາມາທິການດັ່ງກ່າວ ຈາກ 18 ເຂດເລືອກຕັ້ງທົ່ວປະເທດ ພ້ອມດ້ວຍແຂກຖືກເຊີນ.

ຈຸດປະສົງຂອງກອງປະຊຸມຄັ້ງນີ້, ແມ່ນເພື່ອປຶກສາຫາລືປະກອບຄໍາເຫັນໃສ່ຮ່າງບົດສະຫລຸບການເຄື່ອນໄຫວວຽກງານປະຈໍາປີ 2022 ແລະ ທິດທາງແຜນບົດລາຍງານຜົນການຕິດຕາມກວດກາການປະຈໍາປີ 2023 ຂອງ ກສຕສ; ຮ່າງບົດລາຍງານຜົນການຕິດຕາມກວດກາກ່ຽວກັບວຽກງານໃນຂົງເຂດເສດຖະກິດ; ຮ່າງກົດໝາຍທີ່ຈະນໍາເຂົ້າຜ່ານກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຈໍານວນ 3 ສະບັບຄື: ກົດໝາຍວ່າດ້ວຍວິສາຫະກິດ, ກົດໝາຍວ່າດ້ວຍການຄົມມະນາຄົມທາງນໍ້າ, ກົດໝາຍວ່າດ້ວຍເອເລັກໂຕຣນິກ; ຮ່າງມະຕິກອງປະຊຸມຄົບຄະນະຂອງ ກສຕສ ປະຈໍາປີ 2022 ແລະ ວຽກງານອື່ນໆ ທີ່ຕິດພັນກັບກໍາມາທິການບົນພື້ນຖານການປຶກສາຫາລື ແລະ ປະກອບຄໍາຄິດຄໍາເຫັນດັ່ງກ່າວຈະເປັນຂໍ້ມູນພື້ນຖານ ແລະ ເປັນບ່ອນອີງ ໃຫ້ແກ່ການປັບປຸງເອກະສານທີ່ລາຍງານໃນກອງປະຊຸມ ໃຫ້ມີເນື້ອໃນຄົບຖ້ວນ ແລະ ສົມບູນ.

ກອງປະຊຸມ, ໄດ້ຮັບຟັງການສະຫລຸບຕີລາຄາການເຄື່ອນໄຫວວຽກງານຂອງ ກສຕສ ສະພາແຫ່ງຊາດ ປະຈໍາປີ 2022 ແລະ ທິດທາງແຜນການປະຈໍາປີ 2023; ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດການຂຶ້ນທະບຽນອອກໃບຕາດິນ ປີ 2022; ການຈັດຕັ້ງປະຕິບັດໂຄງການຂຸດຄົ້ນແຮ່ທາດແບບທົດລອງ; ຜົນການຕິດຕາມກວດກາການຈັດຕັ້ງປະຕິບັດການຂຶ້ນທະບຽນອອກໃບຕາດິນ ປີ 2022 ແລະ ການຈັດຕັ້ງປະຕິບັດໂຄງການຂຸດຄົ້ນແຮ່ທາດແບບທົດລອງ; ຜົນການຕິດຕາມກວດກາການຈັດຕັ້ງປະຕິບັດນະໂຍບາຍ ແລະ ນິຕິກໍາ ກ່ຽວກັບການຊຸກຍູ້ສົ່ງເສີມການຜະລິດອາຫານສັດ, ຝຸ່ນ ເພື່ອສະໜອງໃຫ້ແກ່ການຜະລິດ; ການຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານການພັດທະນາທ່າບົກ; ການລາຍງານກ່ຽວກັບກົດໝາຍ 3 ສະບັບ ຄື: ກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ), ກົດໝາຍວ່າດ້ວຍການທາງນໍ້າ (ສ້າງໃໝ່), ກົດໝາຍວ່າດ້ວຍເອເລັກໂຕຣນິກ (ສະບັບ ປັບປຸງ); ຮ່າງຍຸດທະສາດການຄຸ້ມຄອງ, ການນໍາໃຊ້ນໍ້າ ແລະ ຊັບພະຍາກອນນໍ້າແຫ່ງຊາດ ຮອດປີ 2030; ໃນທີ່ປະຊຸມ, ບັນດາທ່ານຜູ້ແທນກອງປະຊຸມໄດ້ສຸມສະຕິປັນຍາປະກອບຄໍາຄິດຄໍາເຫັນໃສ່ບົດສະຫລຸບ ແລະ ບົດລາຍງານຕ່າງໆ ຢ່າງມີຈຸດສຸມ ແລະ ກົງໄປກົງມາ; ຈາກນັ້ນ, ກອງປະຊຸມຍັງໄດ້ຮັບຟັງການຜ່ານຮ່າງມະຕິກອງປະຊຸມຄົບຄະນະຂອງ ກສຕສ ປະຈໍາປີ 2022.




ໃນໂອກາດນີ້, ທ່ານ ສົມມາດ ພົນເສນາຮອງປະທານສະພາແຫ່ງຊາດ ໄດ້ມີຄໍາເຫັນໂອ້ລົມຕໍ່ກອງປະຊຸມ ວ່າ: ກອງປະຊຸມຄົບຄະນະ ຂອງ ກສຕສ ແມ່ນມີຄວາມໝາຍຄວາມສໍາຄັນ ໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ພ້ອມກັນນັ້ນ, ກໍເປັນການຮຽກໂຮມສະມາຊິກສະພາແຫ່ງຊາດກ ທີ່ເປັນກໍາມະການຂອງຕົນປະຊຸມ ເພື່ອປຶກສາຫາລື, ແລກປ່ຽນຄໍາຄິດຄໍາເຫັນ ແລະ ຕີລາຄາຄືນຕໍ່ກັບການຈັດຕັ້ງປະຕິບັດວຽກງານ ທີ່ຢູ່ໃນຄວາມຮັບຜິດຊອບຂອງກໍາມາທິການ, ຕິດຕາມກວດກາການຈັດຕັ້ງວຽກງານຂອງຂະແໜງການທີ່ກ່ຽວຂ້ອງ ແລະ ວາງແຜນການເຄື່ອນໄຫວວຽກງານໃນຕໍ່ໜ້າ ໃຫ້ມີຄວາມເປັນເອກະພາບກັນ, ຮັບປະກັນໃນການປະຕິບັດວຽກງານ ໃນການເປັນເສນາທິການໃຫ້ຄະນະປະຈໍາ ແລະ ສະພາແຫ່ງຊາດ ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນ; ພ້ອມນັ້ນ, ທ່ານຍັງໄດ້ຮຽກຮ້ອງໃຫ້ສະມາຊິກສະພາແຫ່ງຊາດ ຕ້ອງໄດ້ພ້ອມກັນຄົ້ນຄວ້າ ແລະ ປະກອບຄໍາຄິດຄໍາເຫັນ ເພື່ອຊອກວິທີການແກ້ໄຂຢ່າງກົງໄປກົງມາ ແລະ ໃຫ້ສອດກັບສະພາບຄວາມເປັນຈິງຂອງປະເທດເຮົາ.

ນາງ ໄຊໂສພາພອນ ມິ່ງມຸງຄຸນ)



## ຮອງປະທານ...

2022).

ໃນໂອກາດນີ້, ສະຫາຍ ນາງ ສູນທອນ ໄຊຍະຈັກ ໄດ້ສະແດງຄວາມຍິນດີຕ້ອນຮັບ, ຊົມເຊີຍການມາຢ້ຽມຢາມ ສປປລາວ ໃນຄັ້ງນີ້ ແລະ ຕີລາຄາສູງຕໍ່ສາຍພົວພັນມິດຕະພາບລາວ-ຫວຽດນາມ ທັງຊົມເຊີຍບັນດາສະຫາຍອະດີດທະຫານອາສາສະໝັກທີ່ໄດ້ມີການອຸທິດຢ່າງໃຫຍ່ຫລວງປະກອບສ່ວນເຂົ້າໃນພາລະກິດແຫ່ງການຕໍ່ສູ້ກູ້ຊາດໃນເມື່ອກ່ອນ ຈົນໄດ້ຮັບໄຊຊະນະ ກໍຄືການປະກອບສ່ວນເຂົ້າໃນພາລະກິດການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃນປັດຈຸບັນ ແລະ ຢືນຢັນຈະຮ່ວມມືກັບບັນດາສະຫາຍຫວຽດນາມ ໃນການສຶກສາອົບຮົມຄົນຮຸ່ນໜຸ່ມໃຫ້ສືບຕໍ່ປົກປັກຮັກສາສາຍພົວພັນພິເສດໃຫ້ມີປະສິດທິຜົນຍິ່ງໆຂຶ້ນ.

ໂອກາດດຽວກັນນີ້, ສະຫາຍ ພົຕ. ຮວ່າງ ແຄັງ ຮຶງ ພ້ອມດ້ວຍຄະນະ ກໍໄດ້ສະແດງຄວາມຂອບໃຈຕໍ່ສະຫາຍຮອງປະທານສະພາແຫ່ງຊາດລາວ ທີ່ໄດ້ໃຫ້ການຕ້ອນຮັບອັນອົບອຸ່ນ ທັງໄດ້ຕີລາຄາສູງຕໍ່ການພົວພັນທີ່ເປັນມູນເຊື້ອຂອງສອງຊາດ ໃນໄລຍະຜ່ານມາ ກໍຄືປັດຈຸບັນ ທວນຄືນການເຄື່ອນໄຫວໃນສະໜາມຮົບຜ່ານມາທີ່ກອງທັບ ແລະ ປະຊາຊົນ 2 ຊາດ ໄດ້ພ້ອມຄຽງບ່າຄຽງໄຫລ່ກັນຕໍ່ສູ້ກັບສັດຕູຜູ້ຮຸກຮານ ແລະ ສະແດງຄວາມເຊື່ອໝັ້ນວ່າ ໃນໄລຍະໃໝ່ 2 ປະເທດ ຈະສືບຕໍ່ຄຽງຂ້າງກັນຕະຫລອດໄປ, ໄດ້ອວຍພອນໃຫ້ບັນດາສະຫາຍການນຳຂອງ ສປປລາວ, ສະພາແຫ່ງຊາດລາວ ກໍຄືສະຫາຍຮອງປະທານສະພາແຫ່ງຊາດລາວ ແລະ ຄອບຄົວ ມີສຸຂະພາບແຂງແຮງ ແລະ ປະສົບກັບຄວາມຈະເລີນກ້າວໜ້າ.

(ນາງ ປາກາລັກ ພົມມີໄຊ)



## ອຸທິດ...

(ສພຊ) ເນື່ອງໃນໂອກາດວັນຊາດທີ 2 ທັນວາ ຄົບຮອບ 47 ປີ (2/12/1975-2/12/2022) ໃນລະຫວ່າງວັນທີ 1-3 ທັນວາ 2022 ຢູ່ທີ່ຫໍສະພາແຫ່ງຊາດ ໄດ້ມີງານບຸນອຸທິດກຸສົນແດ່ອະດີດການນຳຂັ້ນສູງ, ການນຳສະພາປະຊາຊົນສູງສຸດ ແລະ ສະພາແຫ່ງຊາດ ໂດຍການເປັນເຈົ້າພາບເຈົ້າສັດທາຂອງສະພາແຫ່ງຊາດ ນຳໂດຍພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ, ທ່ານ ດຣ. ນາງ ວິພາວັນ ພົມວິຫານ ປະທານກອງທຶນຊ່ວຍເຫລືອສັງຄົມຂອງສະພາແຫ່ງຊາດ ພ້ອມດ້ວຍບັນດາທ່ານຄະນະນຳຂອງສະພາແຫ່ງຊາດ, ບັນດາທ່ານຄະນະກອງທຶນຊ່ວຍເຫລືອສັງຄົມຂອງສະພາແຫ່ງຊາດ ແລະ ພາກສ່ວນຕ່າງໆ.

ເຂົ້າຮ່ວມພິທີໃນຄັ້ງນີ້, ມີພະນະທ່ານ ຈູມມະລີ ໄຊຍະສອນ ອະດີດປະທານປະເທດແຫ່ງ ສປປລາວ, ທ່ານ ປອ. ຄຳພັນ ວິພາວັນ ນາຍົກລັດຖະມົນຕີ, ພຣະອາຈານໃຫຍ່ ມະຫາບຸນມາ ສິມມະພົມ, ປະທານສູນກາງອົງການພຸດທະສາສະໜາສຳພັນ ແຫ່ງ ສປປລາວ, ພຣະອາຈານ ຄະນະບໍລິຫານງານ, ພຣະອາຈານຄະນະກຳມະການ ສູນກາງອົງການພຸດທະສາສະໜາ ພຣະເຖຣະນຸເຖຣະ ຈຳນວນ 49 ອົງ, ບັນດາທ່ານການນຳພັກ-ລັດ, ອົງການຈັດຕັ້ງຕ່າງໆ, ພະນັກງານຫລັກແຫລ່ງອາວຸໂສບຳນານ, ສະມາຊິກສະພາແຫ່ງຊາດ, ແຂກຖືກເຊີນ, ພະນັກງານ-ລັດຖະກອນ, ບໍລິສັດຕ່າງໆ ແລະ ມວນຊົນພາຍໃນນະຄອນຫລວງວຽງຈັນ ເຂົ້າຮ່ວມຢ່າງຫລວງຫລາຍ.

ທັງນີ້, ກໍເພື່ອລະນຶກເຖິງຜົນງານ ແລະ ຄຸນງາມຄວາມດີຂອງບັນດາທ່ານອະດີດການນຳ, ພະນັກງານ-ລັດຖະກອນທີ່ເຄີຍປະຕິບັດໜ້າທີ່ວຽກງານຢູ່ ສະພາປະຊາຊົນສູງສຸດ, ສະພາແຫ່ງຊາດ ແລະ ສະມາຊິກສະພາທີ່ໄດ້ເສຍຊີວິດໄປແລ້ວນັ້ນ ແລະ ເພື່ອອຸດທິດສ່ວນບຸນກຸສົນໃຫ້ແກ່ອະດີດການນຳພັກ-ລັດ ໂດຍສະເພາະແມ່ນອະດີດການນຳຂັ້ນສູງຂອງຊາດ, ປະທານ-ຮອງປະທານສະພາປະຊາຊົນສູງສຸດ, ອະດີດການນຳຂອງສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ ທີ່ໄດ້ລ່ວງລັບໄປແລ້ວ ເຊິ່ງປະກອບມີກອງບຸນ ແລະ ກອງອັດຖະ ທັງໝົດ 31 ກອງ ເພື່ອອຸທິດເຖິງບັນດາທ່ານອະດີດການນຳຂັ້ນສູງ: ປະທານ ໄກສອນ ພົມວິຫານ; ອະດີດປະທານສະພາປະຊາຊົນສູງສຸດ ແລະ ອະດີດປະທານສະພາແຫ່ງຊາດ: ປະທານ ສຸພານຸວົງ, ປະທານ ໜູຮັກ ພູມສະຫວັນ ແລະ ປະທານ ສະໝານ ວິຍະເກດ; ອະດີດຮອງປະທານສະພາປະຊາຊົນສູງສຸດ ແລະ ຮອງປະທານສະພາແຫ່ງຊາດ: ທ່ານ ສີສົມພອນ ລໍວັນໄຊ, ທ່ານ ສີທົນ ກົມມະດຳ, ທ່ານ ໄຟດ່າງ ລໍເບຣຍຢາວ, ທ່ານ ຄຳສຸກ ແກ້ວລາ ແລະ ທ່ານ ຄຳບູ່ ສຸນີໄຊ; ອະດີດກຳມະການຄະນະປະຈຳສະພາປະຊາຊົນສູງສຸດ ແລະ ອະດີດກຳມະການຄະນະປະຈຳສະພາແຫ່ງຊາດ: ທ່ານ ວົງເພັດ ໄຊເກີຢາຈົງຕົວ, ທ່ານ ເຫລື່ອມ ອິນສີຊຽງໃໝ່, ທ່ານ ອຸ່ນເນື້ອ ພົມມະສອນ, ທ່ານ ສຸວັນນະລາດ ໄຊຍະວົງ, ທ່ານ ດຣ. ສົມພະວັນ ອິນທະວົງ, ທ່ານ ໄຊ ເພັດລາສີ, ທ່ານ ທິດມ່ວນ ສາວຈັນທະລາ, ທ່ານ ນາງ ຄຳແພງ ບຸບຜາ, ທ່ານ ສີເມີຍ ນາມລາຊາ, ທ່ານ ດຣ. ຄຳລຽງ ພົນເສນາ, ທ່ານ ເກຍຸນ ຍົດໄຊວິບຸນ, ທ່ານ ດຣ. ບົວສີ ລໍວັນໄຊ, ທ່ານ ທອງສາ ປັນຍາສິດ, ທ່ານ ພົວ. ໄຊສົມແພງ ສຸລິຍາວົງ, ທ່ານ ສົມພອນ ຂະຫຍອງເອກ, ທ່ານ ພົຕ. ບຸນທອນ ຈິດວະລະພົນ, ທ່ານ ຄຳສິງ ໄຊຍະກອນ, ທ່ານ ດວງດີ ອຸດທະຈັກ ແລະ ທ່ານ ພົວ. ວິໄລ ດວງມະນີ ລວມທັງກອງຂອງບັນດາທ່ານອະດີດຮອງປະທານກຳມາທິການ, ອະດີດພະນັກງານບຳນານຂອງສະພາແຫ່ງຊາດ ແລະ ເຈົ້າຖິ່ນເຈົ້າຖານ.

ກິດຈະກຳຂອງງານບຸນໃນຄັ້ງນີ້ ບັນດາທ່ານການນຳ, ພະນັກງານ-ລັດຖະກອນ ແລະ ພາກສ່ວນກ່ຽວຂ້ອງຕ່າງໆ ໄດ້ຫ້າງຫາກະກຽມໃນວັນທີ 1 ທັນວາ 2022 ມື້ຂຶ້ນ 8 ຄ່ຳ ເດືອນ 1 ພສ. 2565; ວັນທີ 2 ທັນວາ 2022 ກົງກັບມື້ຂຶ້ນ 9 ຄ່ຳ ເດືອນ 1 ພສ. 2565 ໄດ້ມື້ຈັດຕັ້ງກອງບຸນ ແລະ ຮັບໂມທະນາທານ ພ້ອມທັງສູດປະຣິຕະມຸງຄຸນ ແລະ ຟັງທັມມະເທດສະໜາ 1 ກັນ ແລະ ຄົບງັນກອງບຸນຕາມຮີດຄອງ; ວັນທີ 3 ທັນວາ 2022 ກົງກັບມື້ຂຶ້ນ 10 ຄ່ຳ ເດືອນ 1 ພສ. 2565 ໄດ້ມີພິທີໃສ່ບາດຖວາຍກອງບຸນ ແລະ ເຄື່ອງສັງຄະທານແດ່ພຣະສົງ 49 ອົງ ແລະ ຟັງອະນຸໂມທະນາກະຖາ, ຄາລະວະ ຮັບພອນຢາດນ້ຳອຸທິດສ່ວນບຸນກຸສົນ ແລະ ສຳເລັດພິທີຢ່າງເປັນທາງການ ເຊິ່ງງານບຸນໃນຄັ້ງ ເຕັມໄປດ້ວຍບັນຍາການຟົດຟື້ນ, ຈິດໃຈເຫລື່ອມໃສສັດທາ ແລະ ລະນຶກຮູ້ບຸນຄຸນຂອງບັນດາທ່ານອະດີດການນຳດັ່ງກ່າວ.

ກ່ອນໜ້ານັ້ນ, ໃນວັນທີ 30 ພະຈິກ 2022 ທີ່ຫໍບູຊາພຣະທາດຫລວງວຽງຈັນ, ຄະນະນຳສະພາແຫ່ງຊາດ ນຳໂດຍທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ຍັງໄດ້ມີພິທີບູຊາຄອບໄຂວ່ພຣະທາດຫລວງວຽງຈັນ ແລະ ສິ່ງສັກສິດຄູ່ບ້ານຄູ່ເມືອງ 4 ຈຸດ ຄື: ຫໍບູຊາທາງດ້ານຫລັງພຣະທາດຫລວງວຽງຈັນ; ທ້າວກຸເວ ເທບຜູ້ຮັກສາທິດເໜືອ (ດ້ານໃນກົມມາລຽນ); ໜ້າພະເຈົ້າໄຊເສດຖາ ແລະ ຫໍພຣະເຈົ້າໄຊເສດຖາ (ຂ້າງສິມວັດທາດຫລວງເໜືອ) ທັງນີ້, ກໍເພື່ອເປັນການຂອບໄຂວ່ບັນດາສິ່ງສັກສິດ ແລະ ພຣະທາດຫລວງວຽງຈັນ ທີ່ເປັນມິ່ງຂວັນຂອງຊາວລາວ ໃຫ້ປົກປັກຮັກສາ ແລະ ອຳນວຍຄວາມສະດວກດິນຟ້າອາກາດເພື່ອຈະຈັດກອງບຸນ ແລະ ກອງອັດຖະ ຈຳນວນ 31 ກອງ ໃຫ້ແກ່ອະດີດການນຳທີ່ມີບຸນຄຸນ, ຄຸນງາມຄວາມດີ ຕໍ່ປະເທດຊາດ ທີ່ໄດ້ລ່ວງລັບໄປແລ້ວນັ້ນ.

ນອກນັ້ນ, ໃນຕອນເຊົ້າຂອງວັນທີ 1 ທັນວາ 2022 ທີ່ສະພາແຫ່ງຊາດ ກໍໄດ້ມີການຈັດພິທີຄອບໄຂວ່ບູຊາທິດທັງສີ່ ເພື່ອຈະເຮັດກອງບຸນອຸດທິດບຸນກຸສົນຫາອະດີດພະນັກງານການນຳພັກ-ລັດ ຜູ້ທີ່ມີຄຸນງາມຄວາມດີຕໍ່ປະເທດຊາດ ທີ່ໄດ້ລ່ວງລັບໄປແລ້ວນັ້ນ ຢູ່ທີ່ສະພາແຫ່ງຊາດ ຝ່າຍພຣະສົງນຳໂດຍພຣະອາຈານ ພຣົມມະລິນ ສີສຸລິນທອນ ເຈົ້າອາທິການວັດໜອງຄຳແສນ ຝ່າຍຄາລະວາດນຳໂດຍທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ.

ໃນພິທີ, ໄດ້ຈັດເຄື່ອງສັກກາລະບູຊາທິດທັງສີ່ ຄື: ທິດຕາເວັນອອກ (ເປັນທີ່ຢູ່ຂອງທ້າວຕະຖະຣະຖະ); ທິດໃຕ້ ເປັນທີ່ຢູ່ຂອງທ້າວວິຣຸລະຫະກະ (ວິຣຸລຫົກ); ທິດຕາເວັນຕົກ (ເປັນທີ່ຢູ່ຂອງທ້າວວິຣູປັກຂະ) ແລະ ທິດເໜືອ (ເປັນທີ່ຢູ່ຂອງທ້າວເວດສຸວັນ ຫລື ທ້າວເວດສະຫວັນ) ໂດຍການໃຊ້ພຣະສົງສີ່ອົງສູດບູຊາແຕ່ລະທິດ ພ້ອມທັງຖວາຍວັດຖຸປັດໄຈ ແລະ ອຸທິດບຸນກຸສົນຫາສິ່ງສັກສິດ ແລະ ເຈົ້າທີ່ເຈົ້າທາງ.

(ສອນສັກ ວັນວິໄຊ)

(ນາງ ປາກາລັກ ພົມມີໄຊ)

## ກອງປະຊຸມ...

ສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນເປັນມູນເຊື້ອທີ່ດີງາມມາແຕ່ດົນນານ ລະຫວ່າງ ສປປລາວ ແລະ ຮົງກາລີ ກໍຄືເປັນຂົວຕໍ່ໃນການພົວພັນຮ່ວມມື ແລະ ປະສານງານ ລະຫວ່າງສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດຮົງກາລີ ໃຫ້ນັບມື້ນັບຂະຫຍາຍຕົວຍິ່ງຂຶ້ນ ທັງຕີລາຄາສູງ ແລະ ຂອບໃຈຢ່າງຍິ່ງ ໄປຍັງສະພາແຫ່ງຊາດ ແລະ ປະຊາຊົນຮົງກາລີ ທີ່ໄດ້ໃຫ້ການຊ່ວຍເຫລືອ ແລະ ສະໜັບສະໜູນສະເໝີມາຕໍ່ການພັດທະນາຂອງ ສປປລາວ ເວົ້າລວມ, ເວົ້າສະເພາະແມ່ນຄະນະມິດຕະພາບລັດຖະສະພາຮົງກາລີ-ລາວ ເປັນກົນໄກໜຶ່ງ ໃນການຊຸກຍູ້ໃນໄລຍະຜ່ານມາ ແລະ ຫວັງຢ່າງຍິ່ງວ່າ, ສະພາແຫ່ງຊາດ, ລັດຖະບານ ແລະ ປະຊາຊົນຮົງກາລີ ຈະສືບຕໍ່ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫລືອແກ່ການພັດທະນາ ສປປລາວ ໃນຕໍ່ໜ້າ.

ໂອກາດດຽວກັນນີ້, ທັງສອງຝ່າຍໄດ້ແຈ້ງໃຫ້ກັນ ແລະກັນຊາບກ່ຽວກັບການພັດທະນາເສດຖະກິດ-ສັງຄົມ ແລະ ການເຄື່ອນໄຫວຂອງສະພາແຫ່ງຊາດໂດຍຫຍໍ້ ທັງປຶກສາຫາລືການພົວພັນຮ່ວມມື ລະຫວ່າງຄະນະມິດຕະພາບລັດຖະສະພາລາວ-ຮົງກາລີ ໃນໄລຍະຜ່ານມາ ກໍຄືທິດທາງໃນຕໍ່ໜ້າ ແນໃສ່ປະກອບສ່ວນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນເປັນມູນເຊື້ອທີ່ດີງາມມາແຕ່ດົນນານ ລະຫວ່າງ ສປປລາວ ແລະ ຮົງກາລີ ເວົ້າລວມ, ເວົ້າສະເພາະແມ່ນລະຫວ່າງສະພາແຫ່ງຊາດລາວ ແລະ ສະຖານກົງສຸນຮົງກາລີ ປະຈຳ ສປປລາວ. ພ້ອມນັ້ນ, ທັງສອງຝ່າຍໄດ້ຕົກລົງເປັນເອກະພາບເຫັນດີໃຫ້ມີການສືບຕໍ່ສະໜັບສະໜູນເຊິ່ງກັນແລະກັນ ໃນເວທີພາກພື້ນ ແລະ ສາກົນຕື່ມອີກ.

(ຂ່າວ: ນາງ ປາກາລັກ ພົມມີໄຊ, ພາບ: ສົມນຶກ ແກ້ວໄຊຍະຈັກ)

ທະນາຄານພັດທະນາລາວ
LDB Bank

ທະນາຄານພົງສະຫວັນ
Phongsavanh BANK

ກົມສື່ມວນຊົນ
ຄະນະເລຂາທິການ ສະພາແຫ່ງຊາດ
ຮ່ວມກັບ
ສະຖານີໂທລະພາບ
ກອງທັບປະຊາຊົນລາວ (LATV)
ສະເໜີລາຍການ
"ກົດໝາຍເພື່ອປະຊາຊົນ"
ອອກອາກາດທາງສະຖານີ ໂທລະພາບ
ກອງທັບປະຊາຊົນລາວ (LATV)
ທຸກໆ ວັນອາທິດ ເວລາ 7:30 – 8:00 ໂມງ
ແລະ ທຸກໆ ວັນພຸດ ເວລາ 19:45 – 20:00 ໂມງ
ເລີ່ມອອກອາກາດ ວັນທີ 3 ສິງຫາ 2022 ນີ້ ເປັນຕົ້ນໄປ

# ສພຂ ຜົ້ງສາລີ ເລົ່າມູນເຊື້ອ ວັນສຳຄັນຂອງຊາດ ແລະ ນິຕິກຳຂອງແຂວງ



(ສພຊ) ຕອນບ່າຍວັນທີ 30 ພະຈິກ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຜົ້ງສາລີ ໄດ້ຈັດພິທີເລົ່າມູນເຊື້ອວັນຊາດທີ 2 ທັນວາ ຄົບຮອບ 47 ປີ (2/12/1975-2/12/2022), ວັນຄ້າຍວັນເກີດຂອງປະທານ ໄກສອນ ພົມວິຫານ (13/12/1920-13/12/2022) ຄົບຮອບ 102 ປີ, ຂໍ້ຕົກລົງຂອງເຈົ້າແຂວງວ່າດ້ວຍການຄຸ້ມຄອງການຈັດງານປະເພນີພາຍໃນແຂວງຜົ້ງສາລີ ໂດຍການເປັນປະທານຂອງທ່ານ ທຸມເພັງ ຈອມວິສານ ຮອງປະທານ ສພຂ; ເຂົ້າຮ່ວມມີບັນດາທ່ານປະທານ-ຮອງປະທານຄະນະກຳມະການ ສພຂ, ຄະນະເລຂາທິການ ສພຂ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານ-ລັດຖະກອນ ສພຂ ເຂົ້າຮ່ວມ.

ໃນພິທີ, ໄດ້ຮັບຟັງທ່ານ ທຸມເພັງ ຈອມວິສານ ເລົ່າຄືນມູນເຊື້ອວັນຊາດທີ 2 ທັນວາ ຄົບຮອບ 47 ປີ, ວັນຄ້າຍວັນເກີດຂອງປະທານໄກສອນ ພົມວິຫານ ຄົບຮອບ 102 ປີ ເຊິ່ງທ່ານກໍໄດ້ຍົກໃຫ້ເຫັນເຖິງມູນເຊື້ອ, ຄວາມໝາຍສຳຄັນຂອງວັນຊາດ 2 ທັນວາ ຕະຫລອດ 47 ປີ ແຫ່ງການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃນແຕ່ລະໄລຍະ ກໍຄືການປົກປັກຮັກສາ ແລະ ສ້າງສາພັດທະນາແຂວງຜົ້ງສາລີ; ເລົ່າຄືນຊີວິດການເຄື່ອນໄຫວປະຕິວັດຂອງປະທານ ໄກສອນ ພົມວິຫານ ແລະ ຜົນງານ, ຄຸນງາມຄວາມດີຂອງປະທານ ໄກສອນ ພົມວິຫານ; ພ້ອມກັນນັ້ນ, ທ່ານກໍໄດ້ຮຽກຮ້ອງໃຫ້ຄະນະນຳ-ຄະນະພັກສືບຕໍ່ນຳພາ-ຊີ້ນຳຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກເຂົ້າສູ່ຊີວິດຕົວຈິງ ໂດຍສະເພາະແມ່ນຕ້ອງກຳແໜ້ນ 9 ໜ້າທີ່ວຽກງານຕົ້ນຕໍ ເຊັ່ນ ສືບຕໍ່ບູລະນະລະບອບ ປະຊາທິປະໄຕ ປະຊາຊົນ; ຍົກລະດັບຄວາມຮູ້ຄວາມສາມາດໃນການປົກປ້ອງອະທິປະໄຕ; ເສີມຂະຫຍາຍທຸກຄວາມອາດສາມາດ ແລະ ທ່າແຮງບົ່ມຊ້ອນ; ສ້າງຖານການຜະລິດແລະການບໍລິການໃຫ້ເຂັ້ມແຂງ; ພັດທະນາຊັບພະຍາກອນມະນຸດຢ່າງແຂງແຮງ; ປັບປຸງລະບົບການຈັດຕັ້ງ, ກົງຈັກ ແລະ ກົນໄກການເຄື່ອນໄຫວຂອງບັນດາອົງການອຳນາດລັດ ໃຫ້ເຂັ້ມແຂງ ແລະ ມີປະສິດທິຜົນ; ເພີ່ມທະວີຄວາມເປັນເຈົ້າການປະຕິບັດການພົວພັນຮ່ວມມືກັບຕ່າງປະເທດ; ເດັດດ່ຽວແກ້ໄຂຈຸດອ່ອນ-ຂໍ້ຄົງຄ້າງພາຍໃນພັກ; ສ້າງການຫັນປ່ຽນຢ່າງແຂງແຮງ ແລະ ເລິກເຊິ່ງ.

ຄຽງຄູ່ກັນນັ້ນ, ກໍຕ້ອງໄດ້ສຶກສາອົບຮົມເອົາມູນເຊື້ອດັ່ງກ່າວ ໂດຍສະເພາະອົບຮົມເອົາແບບຢ່າງຄຸນສົມບັດ, ທາດແທ້ການປະຕິວັດ, ຄວາມຈົງຮັກພັກດີ, ຄວາມເດັດດ່ຽວໜຽວແໜ້ນຂອງປະທານ ໄກສອນ ພົມວິຫານ ແລະ ເດັດດ່ຽວຍຶດໝັ້ນຈຸດໝາຍຂອງການປະຕິວັດເປັນຕົ້ນແມ່ນຈຸດໝາຍສັງຄົມນິຍົມ ໂດຍການເອົາໃຈໃສ່ປະຕິບັດສອງໜ້າທີ່ຍຸດທະສາດ (ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ); ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນຂອງປວງຊົນລາວທັງຊາດ ບົນພື້ນຖານການສ້າງພັນທະພາບກຳມະກອນ, ກະສິກອນ, ນັກຮຽນຮູ້ປັນຍາຊົນ ໃຫ້ແໜ້ນແກ່ນພາຍໃຕ້ການນຳພາຂອງພັກ; ໄດ້ຮັບຟັງທ່ານ ນາງ ພອນສະຫວັນ ສັກຕິຄຸນ ເລຂາທິການ ສພຂ ຂຶ້ນເຜີຍແຜ່ຂໍ້ຕົກລົງເຈົ້າແຂວງ ສະບັບເລກທີ 1048/ຂຜລ, ລົງວັນທີ 8 ພະຈິກ 2022 ວ່າດ້ວຍການຄຸ້ມຄອງການຈັດງານປະເພນີພາຍໃນແຂວງຜົ້ງສາລີ ເຊິ່ງປະກອບມີ 6 ໝວດ 20 ມາດຕາ.

(ນາງ ສຸກສົມພອນ ແກ້ວແສງພະຈັນ)

# ກອງປະຊຸມຮ່ວມລະຫວ່າງສະພາປະຊາຊົນແຂວງ ກັບອົງການປົກຄອງແຂວງອຸດົມໄຊ




(ສພຊ) ໂດຍປະຕິບັດຕາມຂໍ້ຕົກລົງຮ່ວມລະຫວ່າງສະພາປະຊາຊົນແຂວງອຸດົມໄຊ ກັບອົງການປົກຄອງແຂວງອຸດົມໄຊ, ຕອນເຊົ້າຂອງວັນທີ 1 ທັນວາ 2022 ທີ່ຫ້ອງວ່າການແຂວງອຸດົມໄຊ ໄດ້ຈັດກອງປະຊຸມຮ່ວມລະຫວ່າງສະພາປະຊາຊົນແຂວງກັບອົງການປົກຄອງແຂວງ ໂດຍການເປັນປະທານຮ່ວມຂອງທ່ານ ຄຳເຜີຍ ງອນວັນຄຳ ຮອງປະທານສະພາປະຊາຊົນແຂວງ ແລະ ທ່ານ ສົມຈິດ ປັນຍາສັກ ຮອງເຈົ້າແຂວງ ແຂວງອຸດົມໄຊ, ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ ອ້ອມຂ້າງເມືອງໄຊ, ຫົວໜ້າ-ຮອງຫົວໜ້າພະແນກການ-ອົງການທີ່ກ່ຽວຂ້ອງ ແລະ ກອງເລຂາຈາກສະພາປະຊາຊົນແຂວງ ແລະ ຫ້ອງວ່າການແຂວງເຂົ້າຮ່ວມ.

ກອງປະຊຸມຮ່ວມໃນຄັ້ງນີ້ ກໍເພື່ອປຶກສາຫາລື, ແລກປ່ຽນຄຳຄິດເຫັນໃນກະກຽມບັນດາເນື້ອໃນທີ່ຈະນຳໄປຜ່ານໃນວາລະກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງອຸດົມໄຊ ຊຸດທີ II ເຊິ່ງໃນກອງປະຊຸມໄດ້ຜ່ານຮ່າງແຜນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງອຸດົມໄຊ ຊຸດທີ II ໂດຍອີງຕາມແຜນຄາດຄະເນແມ່ນຈະໄຂຂຶ້ນໃນລະຫວ່າງວັນທີ 25-27 ມັງກອນ 2023 ທີ່ຈະມາເຖິງນີ້.

ໂອກາດດັ່ງກ່າວ, ຮອງເຈົ້າແຂວງໄດ້ຕາງໜ້າອົງການປົກຄອງແຂວງ ໄດ້ມີຄຳເຫັນຊີ້ນຳຕໍ່ພະແນກການ-ອົງການຂອງແຂວງ ໃຫ້ເອົາໃຈໃສ່ກະກຽມດ້ານຂໍ້ມູນຕ່າງໆ ເປັນຕົ້ນແມ່ນບົດລາຍງານ ແລະ ນິຕິກຳໃຕ້ກົດໝາຍ (ຮ່າງຂໍ້ຕົກລົງຂອງເຈົ້າແຂວງ) ທີ່ຈະນຳມາຜ່ານໃນວາລະກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ. ຈາກນັ້ນ, ຜູ້ແທນກອງປະຊຸມໄດ້ສຸມໃສ່, ຄົ້ນຄວ້າປະກອບຄຳຄິດຄຳເຫັນແລກປ່ຽນຕໍ່ແຜນການກະກຽມ ແລະ ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ເຊິ່ງໃນກອງສະໄໝສາມັນເທື່ອທີ 4 ແມ່ນຈະໄດ້ຮັບຟັງບັນຫາພົ້ນເດັ່ນ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງອົງການປົກຄອງແຂວງ.

ຕອນທ້າຍກອງປະຊຸມ, ຮອງປະທານສະພາປະຊາຊົນແຂວງ ຍັງໄດ້ມີຄຳເຫັນເນັ້ນໜັກເພີ່ມຕື່ມ ເປັນຕົ້ນແມ່ນພາຍຫລັງສຳເລັດກອງປະຊຸມຄັ້ງນີ້ ມອບໃຫ້ກອງເລຂາປັບປຸງບັນດາເນື້ອໃນໃຫ້ລະອຽດ; ມອບໃຫ້ກອງເລຂາ, ຄະນະເລຂາທິການສະພາປະຊາຊົນແຂວງກັບຫ້ອງວ່າການແຂວງ ຕ້ອງປະສານກັນຢ່າງກົມກຽວວຽກປິ່ນອ້ອມ ແລະ ບັນດາຄະນະກຳມະການສະພາປະຊາຊົນແຂວງ ກັບພະແນກການ, ອົງການທີ່ກ່ຽວຂ້ອງ ຈະຕ້ອງພົວພັນປະສານສົມກັນຢ່າງກົມກຽວ; ມອບໃຫ້ອົງປົກຄອງກວດກາຄືນບັນດາເນື້ອໃນທີ່ຈະນຳເຂົ້າຜ່ານໃນກອງປະຊຸມ ເພື່ອເຮັດໃຫ້ໂຕເລກຂອງວຽກງານຕ່າງໆໃຫ້ກົງກັນ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ; ພະແນກການ-ອົງການຈະຕ້ອງກະກຽມວຽກງານທີ່ຕົນຮັບຜິດຊອບ ເພື່ອຈະໄດ້ຊີ້ແຈງກັບທີ່ຕໍ່ຄຳຊັກຖາມຂອງສະມາຊິກສະພາປະຊາຊົນແຂວງ; ບົດລາຍງານຕ່າງໆ ຕ້ອງໄດ້ສົ່ງໃຫ້ສະພາປະຊາຊົນແຂວງກ່ອນເປີດກອງປະຊຸມຢ່າງຊ້າໜຶ່ງອາທິດ ເພື່ອຈະໄດ້ແຈກຢາຍໃຫ້ສະມາຊິກສະພາປະຊາຊົນແຂວງ ໄດ້ອ່ານ ແລະ ຄົ້ນຄວ້າ ແລະ ການຂຶ້ນລາຍງານ-ການຊີ້ແຈງຕໍ່ຄຳຊັກຖາມ ຕ້ອງປະຕິບັດຕາມວາລະກອງປະຊຸມ ຢ່າງເຂັ້ມງວດ.

(ສີແຫວງ ສີບຸນເຮືອງ)

# ປະເມີນສະມາຊິກຊາວໜຸ່ມດີເດັ່ນ ໃນການປະຕິບັດຂໍ້ແຂ່ງຂັນ 4 ບຸກ ປະຈຳປີ 2022



(ສພຊ) ຕອນເຊົ້າຂອງວັນທີ 29 ພະຈິກ 2022 ໜ່ວຍຊາວໜຸ່ມຮາກຖານສະພາປະຊາຊົນແຂວງຫລວງນ້ຳທາ ໄດ້ປະເມີນສະມາຊິກຊາວໜຸ່ມດີເດັ່ນໃນການປະຕິບັດຂໍ້ແຂ່ງຂັນ 4 ບຸກ ປະຈຳປີ 2022 ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງ ໂດຍການເປັນປະທານຂອງສະຫາຍ ມິກສະຫວັນ ແກ້ວບົວພາ ເລຂາໜ່ວຍຊາວໜຸ່ມຮາກຖານສະພາປະຊາຊົນແຂວງ, ມີບັນດາສະມາຊິກຊາວໜຸ່ມພາຍໃນໜ່ວຍເຂົ້າຮ່ວມຢ່າງພ້ອມພຽງ.

ໃນກອງປະຊຸມໄດ້ຮັບຟັງການຜ່ານຂໍ້ຕົກລົງ ສະບັບເລກທີ 1781/ຄຊປປລ.ຂ ຫລວງນ້ຳທາ, ລົງວັນທີ 31 ຕຸລາ 2022 ວ່າດ້ວຍການຮັບຮອງເອົາເລຂາ, ຮອງເລຂາ ແລະ ຄະນະຂອງໜ່ວຍຊາວໜຸ່ມຮາກຖານສະພາປະຊາຊົນແຂວງ ເຊິ່ງເລຂາຄະນະຊາວໜຸ່ມ ປະຊາຊົນປະຕິວັດລາວແຂວງຫລວງນ້ຳທາ ຕົກລົງຮັບຮອງເອົາສະຫາຍ ມິກສະຫວັນ ແກ້ວບົວພາ ເປັນເລຂາ; ສະຫາຍ ນາງ ສຸມິທາ ສຸກສີປະເສີດ ເປັນຮອງເລຂາທັງເປັນປະທານກວດກາ; ສະຫາຍ ທອງລຸນ ອູ່ຄຳຫລ້າ ເປັນຄະນະ. ພ້ອມນັ້ນ, ຍັງໄດ້ຮັບກົດລະບຽບຂອງຊາວໜຸ່ມປະຊາຊົນປະຕິວັດລາວ ສະໄໝທີ VIII; ກົດໝາຍວ່າດ້ວຍຊາວໜຸ່ມລາວ ເພື່ອເປັນການເຜີຍແຜ່ເຊື່ອມຊຶມໃຫ້ບັນດາສະມາຊິກຊາວໜຸ່ມພາຍໃນໜ່ວຍໄດ້ຮັບຮູ້, ເຂົ້າໃຈ ແລະ ພ້ອມກັນຈັດຕັ້ງປະຕິບັດ.

ຈາກນັ້ນ, ສະມາຊິກຊາວໜຸ່ມພາຍໃນໜ່ວຍໄດ້ຜັດປ່ຽນກັນຂຶ້ນຜ່ານຮ່າງປະເມີນສະມາຊິກຊາວໜຸ່ມດີເດັ່ນໃນການປະຕິບັດຂໍ້ແຂ່ງຂັນ 4 ບຸກ ປະຈຳປີ 2022 ຂອງຕົນ ພ້ອມທັງໃຫ້ຄະແນນຕົນເອງ, ໝູ່ຄະນະ ແລະ ໜ່ວຍ ເຊິ່ງໄດ້ໃຫ້ຄະແນນທາງດ້ານແນວຄິດ, ດ້ານການເຝິກຝົນຫລໍ່ຫລອມຕົນເອງ, ດ້ານການຈັດຕັ້ງ, ດ້ານວິຊາສະເພາະ.

ໃນຕອນທ້າຍກອງປະຊຸມ, ສະຫາຍ ມິກສະຫວັນ ແກ້ວບົວພາ ໄດ້ມີຄຳເຫັນໂອ້ລົມ ແລະ ເນັ້ນໜັກ ເຊິ່ງສະຫາຍໄດ້ສະແດງຄວາມຊົມເຊີຍຕໍ່ຜົນງານໃນໄລຍະຜ່ານມາຂອງສະມາຊິກຊາວໜຸ່ມພາຍໃນໜ່ວຍ ແລະ ເນັ້ນໜັກໃຫ້ສະມາຊິກທຸກສະຫາຍ ຈົ່ງພ້ອມກັນເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານວິຊາສະເພາະຕາມການມອບໝາຍ, ເອົາໃຈໃສ່ຄົ້ນຄວ້າ, ເຊື່ອມຊຶມບັນດາແນວທາງນະໂຍບາຍ, ບັນດາເອກະສານສຳຄັນຕ່າງໆ ເພື່ອນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານຕົວຈິງໃຫ້ສຳເລັດ.

(ນັກຂ່າວ ສພຂ ຫລວງນ້ຳທາ)

# ການສົ່ງເສີມການປູກອ້ອຍໃນຮູບແບບ (2+3) ບໍລິສັດຄວນຄິດໄລ່ຄ່າແຮງງານ ແລະ ຄ່າທີ່ດິນຄືນໃຫ້ປະຊາຊົນ

ຮຽບຮຽງໂດຍ: ສພຂ ສະຫວັນນະເຂດ



ທ່ານ ນາງ ຈັນສະໝອນ ອິນທິລາດ ປະທານຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງໄຊບູລີ ແຂວງສະຫວັນນະເຂດ ໄດ້ໃຫ້ສຳພາດຕໍ່ສື່ມວນຊົນໃນໂອກາດທີ່ທ່ານໄດ້ເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງຊຸດທີ II ທີ່ຫໍວັດທະນະທຳໄກສອນ ພົມວິຫານ ເມື່ອວັນທີ 29 ກໍລະກົດຜ່ານມາ ກ່ຽວກັບການສົ່ງເສີມປູກອ້ອຍໃນຮູບແບບນະໂຍບາຍ (2+3) ພາຍໃນເມືອງໄຊບູລີ ເຊິ່ງພາກສ່ວນບໍລິສັດຜູ້ໃຫ້ທຶນທີ່ເຫັນວ່າຍັງບໍ່ຖືກຕ້ອງສອດຄ່ອງຕາມແນວທາງນະໂຍບາຍຂອງພັກ-ລັດວາງອອກ: ຜ່ານການເຄື່ອນໄຫວຕິດຕາມການຈັດຕັ້ງປະຕິບັດໃນຂໍ້ມູນຕົວຈິງຈາກປະຊາຊົນກ່ຽວກັບ

ອ່ານຕໍ່ໜ້າ 5...

# ສະຫລຸບການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ຮອບທີ II ປະຈຳປີ 2022



(ສພຊ) ຕອນບ່າຍຂອງວັນທີ 23 ພະຈິກ 2022 ສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງຫລວງນ້ຳທາ ໄດ້ເປີດກອງປະຊຸມສະຫລຸບການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ຮອບທີ II ປະຈຳປີ 2022 ແລະ ທິດທາງແຜນການປີ 2023 ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງ ໂດຍການເປັນປະທານຂອງສະຫາຍ ນາງ ຄອນສະຫວັນ ອິນທອງຈັນ ປະທານສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງ; ເຂົ້າຮ່ວມໂດຍສະຫາຍ ນາງ ອຸ່ນຫລ້າ ອ້ຽງລໍລາດ ກຳມະການພັກແຂວງ, ເລຂາໜ່ວຍພັກສະພາປະຊາຊົນແຂວງ, ຮອງປະທານສະພາປະຊາຊົນແຂວງ, ສະຫາຍ ນາງ ຄຳພັດ ໄຊຍະວົງ ຫົວໜ້າຂະແໜງພັດທະນາແມ່ຍິງ, ມີບັນດາສະຫາຍຕາງໜ້າຈາກໜ່ວຍສະຫະພັນແມ່ຍິງສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ພະແນກຍຸຕິທຳແຂວງ, ຕາງໜ້າອົງການຈັດຕັ້ງມະຫາຊົນ ພ້ອມດ້ວຍສະມາຊິກສະຫະພັນແມ່ຍິງພາຍໃນໜ່ວຍເຂົ້າຮ່ວມທັງໝົດ 24 ສະຫາຍ.

ໃນກອງປະຊຸມໄດ້ຮັບຟັງບົດສະຫລຸບການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ຮອບທີ II ປະຈຳປີ 2022 ແລະ ທິດທາງແຜນການປີ 2023 ສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງໄດ້ມີຄວາມພະຍາຍາມສູ້ຊົນໃນການຈັດຕັ້ງປະຕິບັດວຽກງານຕ່າງໆຕາມພາລະບົດບາດ ແລະ ໜ້າທີ່ທີ່ໄດ້ຮັບການມອບໝາຍຈາກຂັ້ນເທິງ ໂດຍສະເພາະແມ່ນການຈັດຕັ້ງປະຕິບັດວຽກງານຂໍ້ແຂ່ງຂັນດັ່ງກ່າວໄດ້ຕິດພັນກັບການສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ການເຄື່ອນໄຫວວຽກງານວິຊາສະເພາະຂອງເອື້ອຍນ້ອງແມ່ຍິງ ພາຍໃຕ້ການນຳພາ-ຊີ້ນຳຂອງຄະນະພັກສະພາປະຊາຊົນແຂວງ ແລະ ຄະນະບໍລິຫານງານສະຫະພັນແມ່ຍິງແຂວງ, ມີພາລະບົດບາດສຶກສາອົບຮົມ, ເຕົ້າໂຮມຄວາມສາມັກຄີ ທັງປູກລະດົມສະມາຊິກແມ່ຍິງເຂົ້າຮ່ວມເຊື່ອມຊຶມແນວທາງນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ, ລັດຖະທຳມະນູນ, ກົດໝາຍ ແລະ ກົດລະບຽບຂອງສະຫະພັນແມ່ຍິງລາວ, ແຜນພັດທະນາເສດຖະກິດ-ສັງຄົມ, ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຂໍ້ແຂ່ງຂັນ 3 ດີ ໄດ້ດຳເນີນໄປຢ່າງຕໍ່ເນື່ອງ ແລະ ມີຜົນສຳເລັດຕາມຄາດໝາຍ.

ສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງ ມີສະມາຊິກທັງໝົດ 23 ຄົນ, ໃນນັ້ນ ເປັນສະມາຊິກພັກສົມບູນ 12 ສະຫາຍ, ສະມາຊິກຊາວໜຸ່ມ 17 ຄົນ, ກຳມະບານ 23 ຄົນ; ລະດັບການສຶກສາຈົບມໍປາຍ 23 ຄົນ, ລະດັບວິຊາສະເພາະຈົບຊັ້ນປະລິນຍາຕີ 19 ຄົນ, ຊັ້ນສູງ 3 ຄົນ; ຜ່ານການຈັດຕັ້ງປະຕິບັດວຽກງານໃນໄລຍະ 1 ປີຜ່ານມາໄດ້ຈັດກອງປະຊຸມດຳເນີນຊີວິດການເມືອງພາຍໃນຮາກຖານສາມາດສະຫລຸບຕີລາຄາປະເມີນຜົນໃນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ນັບທັງດ້ານເນື້ອໃນ ແລະ ວິທີການສາມາດຕີລາຄາຈັດປະເພດບຸກຄົນ 3 ດີ ປະເພດ I ມີ 23 ຄົນ ແລະ ຄັດເລືອກຄອບຄົວຕົວແບບໄດ້ 7 ຄອບຄົວ, ພາຍຫລັງຕີລາຄາຈັດປະເພດຍ້ອງຍໍ ຄະນະປະທານສະຫະພັນແມ່ຍິງຮາກຖານສະເໜີຂໍການຍ້ອງຍໍຈາກສະຫະພັນແມ່ຍິງແຂວງ ໄລຍະຜ່ານມາສະມາຊິກສະຫະພັນແມ່ຍິງໄດ້ຮັບໃບຍ້ອງຍໍ ດີເດັ່ນໃນການຈັດຕັ້ງປະຕິບັດ ຂໍ້ແຂ່ງຂັນ 3 ດີ ເຊັ່ນ ໃບຍ້ອງຍໍການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ຜົນງານ 5 ປີ ຂອງສູນກາງສະຫະພັນແມ່ຍິງລາວ 23 ໃບ, ໃບຍ້ອງຍໍຊາວໜຸ່ມຜົນງານ 5 ປີ, ໃບຍ້ອງຍໍ 5 ເປັນເຈົ້າຂອງກຳມະບານ, ໃບຍ້ອງຍໍເຈົ້າແຂວງ, ໃບຍ້ອງຍໍກາແດງ, ຫລຽນກາແຮງງານໃນວັນເລືອກຕັ້ງ. ພ້ອມນັ້ນ, ບັນດາສະຫາຍຜູ້ເຂົ້າຮ່ວມກອງປະຊຸມ ໄດ້ພ້ອມກັນປະກອບຄຳເຫັນໃສ່ບົດສະຫລຸບດັ່ງກ່າວເພື່ອເຮັດໃຫ້ບົດສະຫລຸບມີເນື້ອໃນຄົບຖ້ວນ, ໜັກແໜ້ນ ແລະ ສົມບູນຂຶ້ນກວ່າເກົ່າ.

ໃນຕອນທ້າຍກອງປະຊຸມສະມາຊິກສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງໄດ້ພ້ອມກັນຈັບມືເພື່ອແຂ່ງຂັນ 3 ດີ ພ້ອມທັງພ້ອມກັນສືບຕໍ່ຮັກສາມູນເຊື້ອ ແລະ ສູ້ຊົນຈັດຕັ້ງປະຕິບັດຕາມຄາດໝາຍທີ່ວາງໄວ້ໃຫ້ສຳເລັດຕາມລະດັບຄາດໝາຍ.

(ນັກຂ່າວ ສພຊ ຫລວງນ້ຳທາ)

# ປາຖະກະຖາວັນປະຫວັດສາດສຳຄັນຂອງຊາດ ແລະ ເພື່ອນມິດຍຸດທະສາດ ທີ່ສະພາປະຊາຊົນແຂວງວຽງຈັນ

(ສພຊ) ໃນຕອນເຊົ້າຂອງວັນທີ 30 ພະຈິກ 2022 ສະພາປະຊາຊົນແຂວງວຽງຈັນ ໄດ້ຈັດພິທີປາຖະກະຖາວັນປະຫວັດສາດສຳຄັນຂອງຊາດ ແລະ ເພື່ອນມິດຍຸດທະສາດຄື: ວັນຊາດ ສປຈີນ ຄົບຮອບ 73 (1/10/1949-1/10/2022), ວັນປະກາດເອກະລາດ ສປປລາວ ຄົບຮອບ 77 ປີ (12/10/1945-12/10/2022), ວັນສ້າງຕັ້ງການທູດລາວ ຄົບຮອບ 77 ປີ (12/10/1945-12/10/2022), ວັນລະນຶກວັນສາກົນ ຄົບຮອບ 35 ປີ (17/10/1987-17/10/2022) ແລະ ວັນສັບປະດາແຫ່ງຊາດເພື່ອລຶບລ້າງຄວາມທຸກຍາກຂອງ ສປປ ລາວ ຄົບຮອບ 19 ປີ (24/10/2003-24/10/2022) ໂດຍການເປັນປະທານ ແລະ ຂຶ້ນປາຖະກະຖາຂອງທ່ານ ນາງ ຈັນທະຄອນ ສີອຳພອນ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງວຽງຈັນ; ເຂົ້າຮ່ວມຮັບຟັງປາຖະກະຖາໃນຄັ້ງນີ້ ມີເລຂາ-ຮອງເລຂາທິການສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງ, ສະມາຊິກພັກ ແລະ ພະນັກງານຂອງສະພາປະຊາຊົນແຂວງເຂົ້າຮ່ວມຮັບຟັງຢ່າງພ້ອມພຽງ.



ໃນພິທີດັ່ງກ່າວ, ປະທານກອງປະຊຸມໄດ້ທວນຄືນມູນເຊື້ອປະຫວັດສາດທີ່ມີຄວາມໝາຍຄວາມສຳຄັນ ເປັນຕົ້ນແມ່ນການຮ່ວມມືລະຫວ່າງ ສປປລາວ-ສປຈີນ, ປະຫວັດການຕໍ່ສູ້ຢ່າງພິລາອາດຫານພາຍໃຕ້ການນຳພາອັນສະຫລາດສ່ອງໃສຂອງພັກປະຊາຊົນປະຕິວັດລາວ, ຄວາມໝາຍຄວາມສຳຄັນຂອງວຽກງານການທູດ ແລະ ແນວທາງການແກ້ໄຂຄວາມທຸກຍາກຂອງພັກ ແລະ ລັດຖະບານໃນອາດີດປະຈຸບັນກໍ່ຄືໃນຕໍ່ໜ້າແນໃສ່ເຮັດໃຫ້ພະນັກງານ, ສະມາຊິກພັກຂອງສະພາປະຊາຊົນແຂວງວຽງຈັນໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ ເປັນຕົ້ນແມ່ນເພື່ອເຮັດໃຫ້ພະນັກງານ-ສະມາຊິກພັກ ແລະ ປະຊາຊົນບັນດາເຜົ່າ ມີຄວາມຮັບຮູ້ ແລະ ເຂົ້າໃຈຕໍ່ກັບມູນເຊື້ອຮັກຊາດ, ຕໍ່ສູ້ພິລະອາດຫານ, ຄວາມສາມັກຄີ, ການເສຍສະຫລະອັນໃຫຍ່ຫລວງຂອງກອງທັບ ແລະ ປະຊາຊົນລາວ ພາຍໃຕ້ການຊີ້ນຳ-ນຳພາຂອງພັກໃນການຕໍ່ສູ້ປົດປ່ອຍຊາດຈົນໄດ້ຮັບໄຊຊະນະ ແລະ ປະກາດເອກະລາດ ໃນວັນທີ 12 ຕຸລາ 1945; ເພື່ອເສີມຂະຫຍາຍມູນເຊື້ອອັນດີງາມຂອງວັນການທູດລາວເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃນໄລຍະໃໝ່ເວົ້າລວມ ເວົ້າສະເພາະແມ່ນການຈັດຕັ້ງປະຕິບັດແນວທາງການຕ່າງປະເທດ, ການພົວພັນຮ່ວມມືຮອບດ້ານກັບບັນດາປະເທດ, ການພົວພັນຮ່ວມມືຮອບດ້ານກັບບັນດາປະເທດເພື່ອນມິດໃນພາກພື້ນ ແລະ ສາກົນ.

ພ້ອມນັ້ນ, ກໍເພື່ອເປັນການຮັດແໜ້ນ ແລະ ເພີ່ມທະວີການພົວພັນຮ່ວມມືຮອບດ້ານກັບປະເທດເພື່ອນມິດຍຸດທະສາດ ທັງເປັນການເສີມຂະຫຍາຍການພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ການຮ່ວມມືຮອບດ້ານກັບ ສປຈີນ; ເພື່ອລະນຶກວັນສາກົນ ພາຍໃຕ້ຫົວຂໍ້: ສາມັກຄີກັນເຄື່ອນໄຫວ ເພື່ອລຶບລ້າງທຸກຮູບແບບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ ໃນນັ້ນ, ແມ່ນຮຽກຮ້ອງໃຫ້ບັນດາປະເທດໃນທົ່ວໂລກເພີ່ມທະວີຄວາມຮັບຮູ້ເຂົ້າໃຈພ້ອມທັງສົ່ງເສີມຄວາມຮູ້ ແລະ ນະວັດຕະກຳທັນສະໄໝ ໃຫ້ແກ່ປະຊາຊົນຂອງຕົນ ແນໃສ່ລຶບລ້າງທຸກຮູບແບບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ໃຫ້ໝົດໄປຕະຫລອດການ; ເພື່ອເປັນການເພີ່ມທະວີຮ່ວມມືກັນ,ເປັນການເຊີດຊູຄວາມຮັບຜິດຊອບ, ເປັນການປຸກລະດົມກຳລັງແຮງທົ່ວສັງຄົມໃນຊາດ ສຸມໃສ່ແກ້ໄຂໄພອຶດຫິວ ແລະ ຄວາມທຸກຍາກໃຫ້ແກ່ປະຊາຊົນໃຫ້ໝົດໄປ.

(ນັກຂ່າວ ສພຊ ວຽງຈັນ)

# ອົງການກາແດງແຂວງໄຊຍະບູລີ ຊ່ວຍເຫລືອເມືອງເງິນ

(ສພຊ) ວັນທີ 24 ພະຈິກ 2022 ຢູ່ທີ່ສະໂມສອນເມືອງເງິນ ແຂວງໄຊຍະບູລີ, ອົງການກາແດງແຂວງໄຊຍະບູລີ ໄດ້ເຄື່ອນໄຫວ ແລະ ເຮັດວຽກຢູ່ເມືອງເງິນ ໂດຍໄດ້ນຳເອົາເຄື່ອງຊ່ວຍເຫລືອບັນເທົາທຸກມອບໃຫ້ອົງການປົກຄອງເມືອງເງິນ ເຊິ່ງເຄື່ອງທີ່ມາມອບຄັ້ງນີ້ມີເກີບ ແລະ ເຄື່ອງນຸ່ງຫົ່ມທີ່ໄດ້ຮັບສະໜັບສະໜູນຈາກປະເທດ ສ.ເກົາຫລີ ມູນຄ່າ 8.825.000 ກີບ ໂດຍການມອບຂອງທ່ານ ວັນນະສິງ ມຸງຄຸນສະຫວັດ ຫົວໜ້າອົງການກາແດງ ແຂວງໄຊຍະບູລີ ພ້ອມດ້ວຍທີມງານ ແລະ ຮັບໂດຍແມ່ນທ່ານ ນາງ ສີຈິມ ບຸນມານະທຳ ຮອງເລຂາພັກເມືອງ, ມີກຳມະການພັກເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການ, ກົມກອງ, ພະນັກງານວິຊາການ ແລະ ນາຍບ້ານເທສະບານເມືອງເຂົ້າຮ່ວມເປັນສັກຂີພິຍານ.




ໂອກາດດັ່ງກ່າວ, ທ່ານ ວັນນະສິງ ມຸງຄຸນສະຫວັດ ໄດ້ຍົກໃຫ້ເຫັນປະຫວັດຄວາມເປັນມາຂອງອົງການກາແດງລາວ ພ້ອມທັງຍົກໃຫ້ເຫັນສິດ ພາລະບົດບາດຂອງອົງການກາແດງລາວ ແລະ ຄວາມຈຳເປັນໃນການສ້າງກອງທຶນເລືອດ, ຜ່ານຂໍ້ຕົກລົງຂອງເຈົ້າແຂວງ ແຂວງໄຊຍະບູລີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງອົງການກາແດງແຂວງ, ຜ່ານຂໍ້ຕົກລົງວ່າດ້ວຍກອງທຶນເລືອດ ແຂວງໄຊຍະບູລີ. ຈາກນັ້ນ, ຜູ້ເຂົ້າຮ່ວມກໍໄດ້ພ້ອມປະກອບຄຳຄິດເຫັນ ໂດຍໄດ້ຍົກໃຫ້ເຫັນດ້ານຄົງຄ້າງໃນໄລຍະຜ່ານມາແນໃສ່ເຮັດໃຫ້ວຽກງານກາແດງແຂວງ-ເມືອງມີຄວາມເປັນເອກະພາບສູງ.

ຕອນທ້າຍ, ທ່ານ ນາງ ສີຈິມ ບຸນມານະທຳ ໄດ້ມີຄຳເຫັນຊີ້ນຳ ເຊິ່ງທ່ານໄດ້ຮຽກຮ້ອງເຖິງພະນັກງານ, ທະຫານ, ຕຳຫລວດ ແລະ ບ້ານ ຕ້ອງກຳໃຫ້ໄດ້ເນື້ອໃນວຽກງານອົງການກາແດງລາວ ເພື່ອນຳໄປເຜີຍແຜ່ເຊື່ອມຊຶມ ໃຫ້ພະນັກງານ ແລະ ປະຊາຊົນບັນດາເຜົ່າ ໄດ້ຮັບຮູ້ເຂົ້າໃຈ ໂດຍສະເພາະແມ່ນກອງທຶນເລືອດ ເຮັດໃຫ້ການຊ່ວຍເຫລືອມະນຸດດ້ວຍກັນມີຄວາມເອື້ອເຟື້ອເພື່ອແຜ່ເຊິ່ງກັນແລະກັນໃຫ້ຫລາຍຂຶ້ນ.

(ສຸລິຍາ ແສງເດືອນ)

ຕໍ່ຈາກໜ້າ 4...

ການສົ່ງເສີມການປູກອ້ອຍໃນຮູບແບບນະໂຍບາຍ (2+3) ຄື: ພາກສ່ວນປະຊາຊົນເປັນແຮງງານ ແລະ ເນື້ອທີ່ດິນເປັນຂອງຕົນເອງ. ສ່ວນບໍລິສັດແມ່ນເປັນທຶນ, ເປັນວິຊາການ ແລະ ເປັນການຕະຫລາດ.

ຜ່ານການຈັດຕັ້ງປະຕິບັດຕົວຈິງຂອງບໍລິສັດເຫັນວ່າການສົ່ງເສີມການປູກອ້ອຍມີການຂະຫຍາຍຕົວຢ່າງຝົດຟື້ນຢ່າງກວ້າງຂວາງ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນຫລຸດພົ້ນຈາກຄວາມທຸກຍາກໃນສ່ວນໜຶ່ງ, ແຕ່ໃນການລົງກວດກາຕົວຈິງແລ້ວຍັງເຫັນວ່າບາງຈຸດບາງດ້ານ ເຊັ່ນ ການສະໜອງແນວພັນ, ທຶນ ແລະ ອື່ນໆ ໃຫ້ແກ່ປະຊາຊົນລວມແລ້ວເປັນລັກສະນະປ່ອຍສິນເຊື່ອ ເປັນຕົ້ນແມ່ນທຶນທີ່ປູກອ້ອຍໄປແມ່ນໄດ້ຄິດໄລ່ດອກເບ້ຍ 6,5% ຕໍ່ປີ, ແນວພັນອ້ອຍ 1 ໂຕນ ຄິດໄລ່ເອົາ 1 ໂຕນເຄິ່ງ ເຫັນວ່າບໍ່ຖືກຕ້ອງສອດຄ່ອງຕາມນະໂຍບາຍພັກ-ລັດວາງອອກ, ໃນຮູບແບບການລົງທຶນສົ່ງເສີມແບບມີສ່ວນຮ່ວມລະຫວ່າງບໍລິສັດກັບປະຊາຊົນ ດັ່ງຄຳຂວັນຂອງບໍລິສັດທີ່ວ່າ: ຮ່ວມຢູ່ຮ່ວມຈະເລີນ.

ສະນັ້ນ ສິ່ງທີ່ຄວນສົ່ງເສີມແມ່ນໃຫ້ບໍລິສັດຄວນມີນະໂຍບາຍໃຫ້ປະຊາຊົນຕື່ມ ທາງກົງ ແລະ ທາງອ້ອມ ບໍ່ວ່າຈະເປັນການສະໜອງທຶນ, ແນວພັນ ແລະ ອື່ນໆ, ສິ່ງທີ່ຄວນປັບປຸງກ່ຽວກັບສະພາບສິ່ງແວດລ້ອມໃນການໃຊ້ເຄມີເກີນຄ່າມາດຕະຖານ, ການບຳບັດນ້ຳເສຍ ເພາະໃນຜ່ານມາມີສັດລ້ຽງປະຊາຊົນຢູ່ໃນຂອບເຂດບໍລິເວນໃກ້ສວນອ້ອຍ, ບໍ່ວ່າບໍລິສັດນ້ອຍກໍຄືບໍລິສັດໃຫຍ່ໄດ້ມີຜົນກະທົບ ເປັນຕົ້ນແມ່ນເກີດມີປາຕາຍໃນແຫລ່ງນ້ຳທຳມະຊາດ, ປະເພດງົວ-ຄວາຍເກີດມີການລຸລູກໃນໄລຍະຜ່ານມາ ການລົງທຶນແບບມີສ່ວນຮ່ວມຂອງປະຊາຊົນແບບ 2+3 ບໍລິສັດນີ້ ບໍ່ຄິດໄລ່ແຮງງານ ແລະ ຄ່າທີ່ດິນໃຫ້ປະຊາຊົນ; ສະນັ້ນ, ສິ່ງທີ່ຄວນສົ່ງເສີມທາງບໍລິສັດຄວນຄິດໄລ່ຄ່າແຮງງານ ແລະ ຄ່າດິນຂອງປະຊາຊົນໃຫ້ໄດ້ຮັບຜົນປະໂຫຍດຕາມຄວາມເໝາະສົມ ສິ່ງທີ່ຄວນປັງປຸງບໍລິສັດຄວນລົງທຶນໃໝ່.

ພ້ອມດຽວກັນນີ້, ທ່ານຍັງໄດ້ຮຽກຮ້ອງ ແລະ ສະເໜີໃຫ້ບໍລິສັດມີການຈັດກອງປະຊຸມຮ່ວມກັບຊາວສວນອ້ອຍໃນແຕ່ລະປີກ່ອນລະດູການຜະລິດ ພ້ອມທັງມີການແລກປ່ຽນບົດຮຽນເຊິ່ງກັນແລະກັນ, ເວລາບໍລິສັດຈະສົ່ງເສີມໃນປີຕໍ່ໄປຈະຕ້ອງສະເໜີໃຫ້ການນຳເມືອງໃຫ້ຮັບຮູ້ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຊັ່ນ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ຫ້ອງການຊັບພະຍາກອນ ແລະ ສິ່ງແວດລ້ອມເມືອງເປັນຕົ້ນ.



## ສຸກສະບາຍຫາຍໂຣຄາ

# ພຶດຕິກຳທີ່ບໍ່ຄວນເຮັດຫລັງຈາກກິນເຂົ້າ

ແປ ແລະ ຮຽບຮຽງໂດຍ: ສາວແວ່ນ



"ໜັງທ້ອງເຄັ່ງ ໜັງຕາຍານ" ເຊື່ອວ່າຫລາຍທ່ານ ເຄີຍມີອາການນີ້ ໂດຍສະເພາະໃນຕອນບ່າຍ ຫລັງຈາກກິນເຂົ້າແລ້ວ ຖ້າຢູ່ບ້ານ ຫລືຢູ່ເຮືອນ ເຮົາສາມາດພັກຜ່ອນໄດ້ ແຕ່ມັນອັນຕະລາຍກວ່າທີ່ທ່ານຄິດ ໂດຍສະເພາະແມ່ນການນອນຫລັງຈາກກິນເຂົ້າແລ້ວ ແລະ ຍັງມີອີກຫລາຍຢ່າງ ທີ່ບໍ່ຄວນເຮັດໃນທັນທີ ຫລັງຈາກກິນເຂົ້າແລ້ວ ເຊັ່ນ:

**1. ລົ້ມໂຕລົງນອນ**

ເພາະການລົ້ມໂຕລົງນອນໃນທັນທີ ພາຍຫລັງກິນເຂົ້າແລ້ວ ນອກຈາກເຮັດໃຫ້ມີລົມໃນກະເພາະອາຫານ ຍັງມີຄວາມສ່ຽງ ທີ່ຈະເຮັດໃຫ້ອາຊິດໃນກະເພາະ ແລະ ອາຫານໄຫລອອກທາງປາກ ຫລື ເອີ້ນງ່າຍໆວ່າ ຣາກນັ້ນເອງ ການລົ້ມໂຕລົງນອນທັນທີ ຫລັງຈາກທີ່ກິນອາຫານ ຈະເຮັດໃຫ້ລົມໃນກະເພາະອາຫານ ຫລື ອາຍແກັສ ທີ່ຢູ່ໃນກະເພາະອາຫານ ແລະ ລຳໄສ້ ຕະຫລອດຮອດລະບົບຍ່ອຍອາຫານ ເຮັດວຽກບໍ່ສະດວກເຊັ່ນດຽວກັນ ອາດເຮັດໃຫ້ລະບົບຍ່ອຍອາຫານເຮັດວຽກໄດ້ບໍ່ດີເທົ່າທີ່ຄວນ ເຊິ່ງຖ້າຍັງສືບຕໍ່ ກໍຈະເຮັດໃຫ້ເກີດບັນຫາກະເພາະໄດ້ງ່າຍດາຍ.

**2. ອອກກຳລັງກາຍ**

ອາການທຳອິດຈະເກີດຂຶ້ນຫາກອອກກຳລັງກາຍໃນທັນທີ ພາຍຫລັງກິນເຂົ້າ (ກິນອາຫານ) ແລ້ວ ແມ່ນອາການເຈັບສຽບກະເພາະອາຫານ ນອກນີ້, ຍັງເຮັດໃຫ້ອາຫານບໍ່ຍ່ອຍ ແລະ ເຮັດໃຫ້ລຳໄສ້ດູດຊຶມສານອາຫານທີ່ດີ ໄດ້ຍາກ ຫລືໄດ້ບໍ່ເຕັມທີ່.

**3. ກິນໝາກໄມ້**

ຫລາຍຄົນອາດຈະບໍ່ຮູ້ ວ່າການກິນໝາກໄມ້ທັນທີ ຫລັງຈາກກິນເຂົ້າແລ້ວ ຈະສົ່ງຜົນບໍ່ດີຕໍ່ຮ່າງກາຍ ເພາະນ້ຳຍ່ອຍໃນໝາກໄມ້ ຈະຍ່ອຍອາຫານທີ່ຫາກໍກິນເຂົ້າໄປ ພາໃຫ້ປ່ຽນຮູບຈົນໝົດຄວາມເປັນກົດ ແລະ ເຮັດໃຫ້ໝາກໄມ້ຖືກຍ່ອຍ ແລະ ການດູດຊຶມຢູ່ລຳໄສ້ອ່ອນຫລຸດລົງ ເຊິ່ງຖ້າຍ່ອຍບໍ່ໝົດ ຈະເຮັດໃຫ້ເກີດການບູດເກີດອາຍແກັດໃນກະເພາະ ເຮັດໃຫ້ເກີດອາການທ້ອງເບັ່ງ, ເຈັບສຽບ ແລະ ແໜ້ນກະເພາະ ສະນັ້ນ, ຖ້າຕ້ອງການກິນໝາກໄມ້ ຄວນກິນຫລັງຈາກກິນເຂົ້າແລ້ວຢ່າງນ້ອຍ 1-2 ຊົ່ວໂມງ.

**4. ອາບນ້ຳ**

ບໍ່ເຊື່ອກໍຕ້ອງເຊື່ອ ຫລັງຈາກກິນເຂົ້າແລ້ວ ບໍ່ຄວນອາບນ້ຳທັນທີ ເພາະການການອາບນ້ຳທັນທີ ຫລັງຈາກກິນເຂົ້າແລ້ວ ສາມາດເຮັດໃຫ້ເຈັບສຽບ, ແສບ ແລະ ແໜ້ນກະເພາະ ລະບົບຍ່ອຍອາຫານເຮັດວຽກບໍ່ໄດ້ດີຄືແຕ່ເກົ່າ ການດູດຊຶມສານອາຫານດີໆ ກໍຈະໜ້ອຍລົງເຊັ່ນດຽວກັນ.

**5. ສູບຢາ**

ການສູບຢາ ບໍ່ວ່າເວລາໃດ ມັນກໍສົ່ງຜົນຮ້າຍຕໍ່ຮ່າງກາຍ ແຕ່ການສູບຢາຫລັງຈາກກິນເຂົ້າແລ້ວ ນອກຈາກຈະເຮັດໃຫ້ເກີດທ້ອງເບັ່ງ ຍັງເພີ່ມປະລິມານສານພິດຈາກການເຜົາໄໝ້ຫລາຍຂຶ້ນ ເຮັດໃຫ້ມີໂອກາດເປັນຖົງລົມໃຫຍ່ກ່ວາປົກກະຕິ ເພາະວ່າຮ່າງກາຍກຳລັງເຜົາໄໝ້ອາຫານ ຖ້າໄດ້ຮັບສານນິໂກຕິນໄປນຳ ຮ່າງກາຍຈະໄດ້ຮັບສານນັ້ນຫລາຍຂຶ້ນ ຄ້າຍຄືກັບການສູບຢາໜຶ່ງອັນເທົ່າກັບໄດ້ພິດຂອງມັນ 10 ເທົ່າ.

ວິທີທີ່ດີທີ່ສຸດ ຫລັງກິນເຂົ້າແລ້ວຄວນນັ່ງພັກ ຫລື ຍ່າງຊ້າໆ ເພື່ອຊ່ວຍໃຫ້ກະເພາະຍ່ອຍງ່າຍ ແລະ ສະດວກກວ່າ, ບໍ່ຄວນເຮັດກິດຈະກຳທີ່ເຄັ່ງຕຶງ ແລະ ບໍ່ຄວນນອນທັນທີ. ມັນບໍ່ຍາກເກີນໄປແມ່ນບໍ່ ທີ່ເຮົາຈະປະຕິບັດໃຫ້ເປັນກິດຈະວັດປະຈຳວັນ ເພື່ອສຸຂະພາບທີ່ດີຂອງທ່ານເອງ.

## ສາລາກະວີ

# 2 ທັນວາມີໄຊ

\# ໂດຍ: ເງາະປ່າ

❊ ນະພາເບີຍເບີກແຈ້ງ
ເມໂຄສີຄາມຢາຍ
ປະຊາລາວສຸກລົ້ນ
ປວງຊົນລາວທົ່ວແຄວ້ນ

ແສງສ່ອງປະກາຍສີ
ທົ່ວແດນດິນດ້າວ
ບິນທຳລະນີແຜ່ນ
ເໜືອໃຕ້ຊື່ນບານ ແທ້ແລ້ວ!

❊ ຄາວນັ້ນໂຈນໝູ່ຮ້າຍ
ເຜົາຈີ່ທັງດັບສູນ
ບ້ານເມືອງແປນປານລານເຂົ້າ
ເຄຫາໂຮງ ທັງເຈດີຣາບກ້ຽງ

ທຳລາຍຮຸກຮາວີ
ໝູ່ປະຊາຊາວບ້ານ
ສັດຕູເຜົາຜີນທົ່ງ
ທຳລາຍລ້າງຈູດເຜົາ

❊ ຍ້ອນພັກເຮົາສະຫລາດກ້າ
ເຂັ້ມແຂງທັງກາຍໃຈ
ປຸກລະດົມປະຊາເຕົ້າ
ປະກາດຕີຕອບຕ້ານ

ນຳພາຮ່ວມໂຮມແຮງ
ໄລ່ມອນມານບ້າ
ຫລາຍເຜົ່າຄົນໃນຊາດ
ມານຮ້າຍຜ່າຍໜີ

❊ ຕົກມາຮອດຍຸກນີ້
ສີວິໄລຕາມຍຸກ
ລະບອບເກົ່າເໜົ່າເໜັນມ້າງ
ນຳບົດຮຽນຍຸດທະສາດໃຊ້

ລາວຮຸ່ງເຮືອງໃສ
ທຽບສາກົນກ້າວ
ສະສາງແປງປ່ຽນ
ປົກປັກສ້າງພໍ່າຮັກສາ

❊ 2 ທັນວາ ເອກອ້າງ
ຊາດລາວມີຄວາມສຸກ
ເວັນ ແລະ ຄືນນັ້ນກ້ອງ
ທຸງວົງເດືອນຢືນຄູ່ຟ້າ

ເດີນທາງຂວບ 47 ປີ
ມ່ວນສະຫລອງທົ່ວແດນຟື້ນ
2 ທັນວາເຊັ່ງຊ່າ
ດິນພື້ນແຜ່ນລາວ ຊອບແລ້ວ!



## ທັກທາຍ ລະບາຍ

\# ສາວຈົ້ມ

### (ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)

❊ **ຊົມ**ເຊີຍນຳໃຈວັນຊາດທີ **2 ທັນວາ ຄົບຮອບ 47 ປີ** ທີ່ໄດ້ໝູນວຽນມາບັນຈົບອີກວາລະໜຶ່ງ ຊຶ່ງຫລາຍພາກສ່ວນມີການຕົບແຕ່ງເອ້ ປະດັບຮຸ່ງເຮືອງສົດໃສ ທັງນອກ-ໃນອາຄານ ດອກດວງປະດັບເອ້ ຄຳລ້ອນຊົມເຊີຍຍ້ອງ ຄຸນຄວາມດີຂອງພັກ-ລັດ ປະຊາສຸກລາບລົ້ນ ຜ່ານຄືນວັນອັນໂຫດຮ້າຍ ມີໄຊກ້າສະຫງ່າງາມ **ຊົມເຊີຍ!**

❊ **ກອງ**ປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ກຽມໄຂຂຶ້ນຢ່າງເປັນທາງການ ໃນວັນທີ **5-30 ທັນວາ 2022** ກອງປະຊຸມເທື່ອນີ້ ມີຫລາຍວຽກສຳຄັນ ຄື ວຽກຂອງລັດຖະບານ ວຽກສານ-ໄອຍະການພ້ອມ ວຽກກວດສອບ-ກວດການັ້ນ ທັງ **3 ກົດໝາຍສ້າງໃໝ່ ປັບປຸງຕື່ມອີກ 9 ສະບັບ** ພ້ອມພໍ່ກັບ ວຽກສະພາແຫ່ງຊາດ ຍໍ່ຍົກມາລາຍງານ ທັງປະກອບຄຳເຫັນ ໃສ່ປະເດັນຫລາຍຂໍ້ ພໍຮອດວາລະທ້າຍ ຫລາຍມະຕິລີບົ່ງບອກ ຜົນຮັບຂອງວຽກໄວ້ ຫລາຍອັນພົ້ນເດັ່ນປະເດັນ **ທ່ານເອີຍ!**

❊ **ຕະ**ຫລອດໄລຍະເວລາ 20 ວັນລັດຖະການ ທີ່ດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX (156) ເພີ່ນເອົ້າ ສາຍດ່ວນຂອງສະພາ ໃຫ້ທ່ານອາໂທລມາ ສົ່ງສານຂໍ້ມູນເອົ້າ ເອົານັບຫາຄາລ້ອງ ສະໜອງໄປຍັງຄະນະ ເພື່ອປຶກສາຊອກຄົ້ນ ຫາທາງແກ້ຊ່ອຍກັນ **ທ່ານເອີຍ!** (ອີເມລ: nalao.156@gmail.com).

## ຊອບຍິ້ມ

\# ແອ່ນຕຸ້ງ

**ເລື່ອງ: ແວ່ນຕາ**

ມື້ໜຶ່ງ ທ້າວ ກິບ້ອຍ ກັບຈາກໂຮງຮຽນ ພໍແຕ່ມາຮອດເຮືອນກໍແລ່ນ ຫາພໍ່ທັນທີ ທັງເອົ້າຂຶ້ນວ່າ:

**ທ້າວ ກິບ້ອຍ** : ແວ່ນຕາອີ່ພໍ່ ກະຂະຫຍາຍໄດ້ໝົດທຸກແນວເບາະ?

**ພໍ່** : ເອີ່ ກະໄດ້ຫັ້ນລະ!

ທ້າວກິບ້ອຍຈັບໃບຄະແນນຍື່ນໃຫ້ພໍ່ພ້ອມທັງເອົ້າຂຶ້ນວ່າ:

**ທ້າວ ກິບ້ອຍ** : ຄັນຊັ້ນ ກະໃສ່ເບິ່ງໃບຄະແນນໃຫ້ລູກແດ່ ຂະຫຍາຍຈາກ 2 ໃຫ້ເປັນ 10 ໂລດເດີອີ່ພໍ່, ມື້ອື່ນລູກຊິເອົາ ໄປອ້າງໝູ່ຢູ່ໂຮງຮຽນ

**ພໍ່** : ຮ້ອາຍ! ບັກອັນນີ້!!!



## ຄະຕິເຕືອນໃຈ

\# ດອກຂະຍອມ

ຄັນວ່າຄວາມຮູ້ໜ້ອຍ
ຢ່າໄດ້ເມົາມົວຫລົງ
ຄືດັ່ງກົບໃນສ້າງ
ເຫັນແຕ່ບໍ່ານ້ຳສ້າງນ້ອຍ

ຢ່າປະເອີນວ່າມີຫລາຍ
ວ່າຕົນມີຄວາມຮູ້
ຫາງທະເລບໍ່ເຄີຍຜ່ານ
ວ່າໄກກວ້າງກວ່າທະເລ ເປັນລື

# ກົດໝາຍວ່າດ້ວຍການສຳຫລວດວັດແທກ ແລະ ສ້າງແຜນທີ່

ຕໍ່ຈາກສະບັບກ່ອນ...

**ມາດຕາ 81 ສິດ ແລະ ໜ້າທີ່ຂອງກະຊວງພາຍໃນ**

ໃນການຄຸ້ມຄອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ກະຊວງພາຍໃນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະລະບຽບການ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ເພື່ອສະເໜີລັດຖະບານພິຈາລະນາ;
2. ຜັນຂະຫຍາຍ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ເປັນແຜນການ, ແຜນງານ ແລະ ໂຄງການ ພ້ອມທັງຈັດຕັ້ງປະຕິບັດ;
3. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;
4. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ, ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;
5. ຊີ້ນຳ, ຊຸກຍູ້, ຕິດຕາມ ກວດກາ ການຈັດຕັ້ງປະຕິບັດກົດໝາຍ, ລະບຽບການ ແລະການຈັດຕັ້ງປະຕິບັດວຽກງານສຳຫຼວດວັດແທກ ແລະສ້າງແຜນທີ່ ໃນຂອບເຂດທົ່ວປະເທດ;
6. ຄົ້ນຄວ້າສ້າງ ແລະ ປັບປຸງ ມາດຕະຖານເຕັກນິກກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ພ້ອມທັງຊຸກຍູ້, ແນະນຳ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດມາດຕະຖານເຕັກນິກດັ່ງກ່າວ;
7. ຂຶ້ນແຜນ ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ ບຸກຄະລາກອນກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;
8. ສຶກສາ, ຄົ້ນຄວ້າເຕັກນິກວິທະຍາສາດ ທີ່ທັນສະໄໝ ແລະ ກ້າວໜ້າ ເພື່ອນຳໃຊ້ເຂົ້າໃນວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;
9. ສ້າງ, ຄຸ້ມຄອງ, ນຳໃຊ້ ແລະ ສະໜອງຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດເພື່ອຮັບໃຊ້ການພັດທະນາເສດຖະກິດ-ສັງຄົມ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;
10. ຂຶ້ນທະບຽນເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່, ກວດກາ ແລະຢັ້ງຢືນຄຸນນະພາບຂໍ້ມູນ, ຜະລິດຕະພັນ ສຳຫຼວດວັດແທກ ແລະສ້າງແຜນທີ່.
11. ຄຸ້ມຄອງ ແລະ ຂຶ້ນບັນຊີຜູ້ດຳເນີນທຸລະກິດ ແລະ ຜູ້ປະກອບອາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ໃນຂອບເຂດທົ່ວປະເທດ;
12. ເກັບຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕາມລະບຽບການ;
13. ປະສານສົມທົບກັບ ກະຊວງ, ອົງການຂອງລັດ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານສຳຫຼວດວັດແທກ ແລະສ້າງແຜນທີ່ ລວມທັງການສຳຫຼວດວັດແທກ ແລະສ້າງແຜນທີ່ ທີ່ພົວພັນກັບເສັ້ນຊາຍແດນແຫ່ງຊາດ ແລະ ເຂດແດນເຊື່ອມຕໍ່;
14. ພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;
15. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ໃຫ້ລັດຖະບານ ຢ່າງເປັນປົກກະຕິ;
16. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 82 ສິດ ແລະ ໜ້າທີ່ຂອງພະແນກພາຍໃນ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ພະແນກພາຍໃນ ແຂວງ, ນະຄອນ ຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;
2. ໂຄສະນາເຜີຍແຜ່, ສຶກສາອົບຮົມ, ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;
3. ຊີ້ນຳ, ຊຸກຍູ້, ຕິດຕາມ ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານສຳຫຼວດວັດ ແທກ ແລະ ສ້າງແຜນທີ່ ຂອງຫ້ອງການພາຍໃນເມືອງ, ເທດສະບານ, ນະຄອນ;
4. ດຳເນີນການຄຸ້ມຄອງ, ຕິດຕາມ ກວດກາການນຳໃຊ້ເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່ ລວມທັງການສຳຫຼວດວັດແທກ ແລະ ສ້າງແຜນທີ່ ພາຍໃນ ແຂວງ, ນະຄອນຫຼວງ;
5. ຄຸ້ມຄອງ ການສຳຫຼວດວັດແທກ ແລະ ສ້າງແຜນທີ່ພູມສັນຖານ, ແຜນທີ່ເສັ້ນເຂດແດນເຊື່ອມຕໍ່ ແລະ ຂໍ້ມູນ ຂ່າວສານ ພູມສາດ ຂອງ ແຂວງ, ນະຄອນຫຼວງ ລວມທັງການພິມຈຳໜ່າຍແຜນທີ່ ພາຍໃນແຂວງ, ນະຄອນຫຼວງ;
6. ຄຸ້ມຄອງ, ປົກປັກຮັກສາ ຂໍ້ມູນເຄົ້າສຳຫຼວດວັດແທກ, ໂຄງລ່າງພື້ນຖານສຳຫຼວດວັດແທກ ແລະ ສະຖານີອ້າງອີງການວັດແທກແບບຕໍ່ເນື່ອງ ທີ່ຕັ້ງຢູ່ແຂວງ, ນະຄອນຫຼວງ;
7. ຂຶ້ນແຜນ ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ ບຸກຄະລາກອນກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;
8. ເກັບຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕາມລະບຽບການ;
9. ປະສານສົມທົບກັບພະແນກ, ອົງການລັດທຽບເທົ່າພະແນກການຂັ້ນແຂວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່, ການສຳຫຼວດ ແລະ ສ້າງແຜນທີ່ ທີ່ພົວພັນກັບເສັ້ນຊາຍແດນແຫ່ງຊາດ ແລະ ເຂດແດນເຊື່ອມຕໍ່;
10. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ຕາມການມອບໝາຍ;
11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ໃຫ້ກະຊວງພາຍໃນ ແລະ ອົງການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;
12. ນຳໃຊ້ສິດ ແລະປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 83 ສິດ ແລະ ໜ້າທີ່ຂອງຫ້ອງການພາຍໃນ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານສຳຫຼວດວັດແທກແລະສ້າງແຜນທີ່ຫ້ອງການພາຍໃນ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;
2. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;
3. ຊີ້ນຳ, ຊຸກຍູ້, ຕິດຕາມ ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ພາຍໃນ ເມືອງ, ເທດສະບານ, ນະຄອນ;
4. ຄຸ້ມຄອງ, ປົກປັກຮັກສາ ຂໍ້ມູນເຄົ້າສຳຫຼວດວັດແທກ, ໂຄງລ່າງພື້ນຖານສຳຫຼວດວັດແທກ ແລະ ສະຖານີອ້າງອີງການວັດແທກແບບຕໍ່ເນື່ອງ ທີ່ຕັ້ງຢູ່ເມືອງ, ເທດສະບານ, ນະຄອນ;
5. ປະສານສົມທົບກັບຫ້ອງການ, ອົງການລັດທຽບເທົ່າຫ້ອງການຂັ້ນເມືອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່, ການສຳຫຼວດ ແລະ ສ້າງແຜນທີ່ ທີ່ພົວພັນກັບເສັ້ນຊາຍແດນແຫ່ງຊາດ ແລະ ເຂດແດນເຊື່ອມຕໍ່;
6. ສະຫຼຸບ ແລະ ລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ໃຫ້ພະແນກພາຍໃນ ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;
7. ນຳໃຊ້ສິດ ແລະປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 84 ສິດ ແລະ ໜ້າທີ່ຂອງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ໃຫ້ການຮ່ວມມື ແລະ ປະສານສົມທົບກັບຂະແໜງການພາຍໃນ ຕາມພາລະບົດບາດ ແລະ ຄວາມຮັບຜິດ ຊອບຂອງຕົນ ກ່ຽວກັບການຄຸ້ມຄອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່.

**ໝວດທີ 2**

**ການກວດກາວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່**

**ມາດຕາ 85 ອົງການກວດກາ**

ອົງການກວດກາວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 80 ຂອງກົດໝາຍສະບັບນີ້;
2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ພົນລະເມືອງ.

**ມາດຕາ 86 ເນື້ອໃນການກວດກາ**

ການກວດກາວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;
2. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຄຸ້ມຄອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;
3. ການເຄື່ອນໄຫວວຽກງານ ແລະ ການດຳເນີນທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ລວມທັງການເຄື່ອນໄຫວຂອງຜູ້ປະກອບອາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່;
4. ການແກ້ໄຂຄຳສະເໜີຂອງພາກສ່ວນທີ່ກ່ຽວຂ້ອງກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່.

**ມາດຕາ 87 ຮູບການການກວດກາ**

ການກວດກາວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມແຜນການປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປົກກະຕິ ແລະ ມີກຳນົດເວລາທີ່ແນ່ນອນ;
2. ການກວດການອກແຜນການ ຊຶ່ງແມ່ນ ການກວດກາເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາແບບຮີບດ່ວນທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

ອ່ານຕໍ່ສະບັບໜ້າ...




## ຄຸນສົມບັດໃໝ່ ແລະ ສິນທຳປະຕິວັດ...

**ໂດຍ: ດົ້ນກົບເມກ**

ທ່ານ ພູມີ ວົງວິຈິດ ໄດ້ຂຽນປຶ້ມຄຸນສົມບັດໃໝ່ ແລະ ສິນທຳປະຕິວັດ ເພື່ອຢາກແນະນຳໃຫ້ຄົນ (ພະນັກງານ) ໄດ້ເຂົ້າໃຈການດຳເນີນຊີວິດປອດໃສຂາວສະອາດ ແລະ ຊື່ສັດຕໍ່ໜ້າທີ່ ມີລະບຽບວິໄນເຄັ່ງຄັດຕໍ່ພາລະກິດສ້າງສາພັດທະນາຊາດໃນທຸກຂົງເຂດວຽກງານ ດັ່ງທີ່ເພິ່ນໄດ້ເວົ້າແຈ້ງໃນປຶ້ມດັ່ງກ່າວໜ້າທີ 89 ວ່າ: ພື້ນຖານຄຸນສົມບັດສິນທຳປະຕິວັດ ແມ່ນດຸໝັ່ນໃນສິ່ງທີ່ຄວນເຮັດ, ປະຢັດໃນສິ່ງທີ່ຄວນປົກປັກຮັກສາ, ປອດໃສ ແລະ ທ່ຽງທຳໃນການພົວພັນກັບຄົນທັງຫລາຍ...

ຄຳວ່າປອດໃສ ແລະ ທ່ຽງທຳໃນການພົວພັນກັບຄົນທັງຫລາຍນີ້ ຍ່ອມຕ້ອງໄດ້ນຳມາຄຶດພິຈາລະນາໃຫ້ຮອບຄອບ ເພື່ອປ້ອງກັນບໍ່ໃຫ້ບາງຄົນສວຍໂອກາດໃຊ້ອຳນາດ, ໜ້າທີ່ຕຳແໜ່ງໃນການປະຕິບັດໜ້າວຽກເຊັ່ນ: ການປະຊຸມ, ສຳມະນາ ຫລືການໄປປະຊຸມ, ທັດສະນະວຽກຢູ່ຕ່າງປະເທດ ເຊິ່ງມີທາງສຽງຕຳນິສິ່ງຂ່າວຂອງສັງຄົມທີ່ມີພະນັກງານບາງຄົນຕິດນິໄສ ຫລື ສວຍໂອກາດລວບລາມ-ຜິດສິນທຳຮີດຄອງ ເພາະເຂົ້າໃຈວ່າຫ່າງໄກຄອບຄົວຫ່າງໄກປະເທດແລ້ວສວຍໂອກາດ ເຊິ່ງພົວພັນຜ່ານວຽກ-ໜ້າທີ່ຕ່າງໆ ພະນັກງານກ່ຽວຂ້ອງຄວນປະພຶດແບບຢ່າງທີ່ດີແກ່ສັງຄົມ ຫລີກເວັ້ນການຕິດນິໄສທຶນນິຍົມ ອິດສະລະ ແລະ ເສລີຫລົ້ນກິນຟຸມເຟືອຍ...

ປຶ້ມຄຸນສົມບັດໃໝ່ ໜ້າທີ 95 ຍັງເວົ້າຕື່ມວ່າ: ພະນັກງານຜູ້ໃດຫາກບໍ່ຮູ້ສຶກຕື່ນໂຕ, ສະດຸ້ງໄວຕໍ່ໜ້າທີ່ໃໝ່, ບໍ່ຍອມອຶດທົນຄົ້ນຄິດ... ບໍ່ມີແນວຄິດປະດິດສ້າງໃນການປະຕິບັດແນວທາງຂອງພັກແລ້ວ ພະນັກງານຄົນນັ້ນບໍ່ສົມເປັນພະນັກງານດີ..., ຖ້າວ່າຜູ້ໃດຫາກໄດ້ອ່ານຄົ້ນຄິດໃນຫລາຍຈຸດຂອງປຶ້ມຄຸນສົມບັດສິນທຳປະຕິວັດໃໝ່ທີ່ ທ່ານ ພູມີ ວົງວິຈິດ ຂຽນໄວ້ກໍຈະເຂົ້າໃຈວ່າເພິ່ນ ມຸ້ງສ້າງຄົນໃຫ້ມີຄຸນສົມບັດສິນທຳດີງາມ, ຕໍ່ຕ້ານການຟຸມເຟືອຍ, ປະພຶດແບບເສລີບໍ່ຮົ່ວ, ບໍ່ເຄົາລົບຮີດຄອງປະເພນີ ເຊິ່ງບາງກໍລະນີອາດກວມເອົາພວກນິໄສມັກມ່ວນທີ່ຂາດຄຸນສົມບັດເປັນພະນັກງານຂອງພັກ-ລັດ.

ພວກເຮົາບໍ່ຄວນຫລົງລືມຄຳແນະນຳໃນປຶ້ມດັ່ງກ່າວວ່າ: ໃຫ້ແຕ່ລະຄົນຮຽນຮູ້ຄຸນສົມບັດອັນດີເປັນແວ່ນແຍງຂອງຜູ້ນຳປະຕິວັດ, ປອດໃສ, ຂາວສະອາດ ເພື່ອສ້າງສັງຄົມສີວິໄລກ້າວໜ້າ...!































